Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.orgg

# ລະບົບ ແລະຂະບວນການ
# ສົ່ງເສີມ ກະສິກຳ ແລະ ປ່າໄມ້




ເອກະສານ ປະກອບການຝຶກອົບຮົມ 01:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະ ພະນັກງານສົ່ງເສີມຂັ້ນ ບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

## ປື້ມຄູ່ມືໃນແຕ່ລະເລື່ອງ

**I. ເອກະສານປະກອບການຝຶກອົບຮົມຄັ້ງທີ 1**

1. ລະບົບ ແລະຂະບວນການຝຶກ _ ສົ່ງເສີມວຽກງານກະສິກຳ ແລະປ່າໄມ້
2. ວິທີການປະເມີນຄວາມຕ້ອງການຝຶກ_ສົ່ງເສີມ ຊາວກະສິກອນ (TNA _ Kiss)
3. ເຕັກນິກການພົວພັນ_ສື່ສານທີ່ມີປະສິດທິພາບ
4. ວິທີການເຮັດວຽກກັບຊາວກະສິກອນ
5. ຄູ່ມືພາກສະໜາມ ສຳລັບນັກສົ່ງເສີມ

**II. ເອກະສານປະກອບການຝຶກອົບຮົມຄັ້ງທີ 2**

6. ວິທີການຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດທິພາບ
7. ບາງເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ
8. ການຝຶກອົບຮົມແບບມີສ່ວນຮ່ວມ
9. ເຕັກນິກພື້ນຖານສຳລັບວິທະຍາກອນ
10. ການພັດທະນາກຸ່ມຜູ້ຜະລິດ
11. ການຄຸ້ມຄອງບໍລິຫານກຸ່ມທີ່ມີປະສິດທິພາບ
12. ການພັດທະນາຜູ້ນຳຊຸມຊົນ ແລະວິຊາການບ້ານ
13. ການຕິດຕາມຊຸກຍູ້ຂະບວນການຝຶກ_ສົ່ງເສີມຊາວກະສິກອນ
14. ວິທີການ, ເຄື່ອງມືການວາງແຜນ ແລະປະຕິບັດແຜນການ

**III. ເອກະສານປະກອບການຝຶກອົບຮົມຄັ້ງທີ 3**

15. ພື້ນຖານການພັດທະນາ ແລະວິທີການຝຶກສົ່ງເສີມ ແບບມີສ່ວນຮ່ວມ
16. ວິໃສທັດໃນການປັບປຸງວຽກງານການສົ່ງເສີມ ກະສິກຳ
17. ປັດໃຈມະນຸດ ແລະການພັດທະນາ ວຽກງານ ສົ່ງເສີມ ກປ
18. ການຈັດທັດສະນະສຶກສາ
19. ລະບົບ ພໍ່ປົກຄອງລູກ ຄວາມກະຕືລືລົ້ນ ແລະການມີສ່ວນຮ່ວມ



# ເອກະສານ 01:
# ລະບົບ ແລະຂະບວນການສົ່ງເສີມກະສິກຳ ແລະປ່າໄມ້

## ສາລະບານ


ບົດນຳ ........................................................................ 2

ພາກທີ 1 ສະພາບລວມຂອງບັນຫາໃນວຽກງານສົ່ງເສີມ ກປ ........... 5

ບັນຫາທີ່ສຳຄັນດ້ານກະສິກຳ ແລະປ່າໄມ້ ຂອງ ສປປ ລາວ ............... 5

ຂໍ້ຈຳກັດ ........................................................................ 10

ສິ່ງທີ່ເປັນຄວາມສ່ຽງ ........................................................ 10

ພາກທີ 2 ທາງເລືອກໃນການປັບປຸງ ແລະພັດທະນາລະບົບການສົ່ງເສີມ ກະສິກຳ ........................................................................ 12

ດ້ານຍຸດທະສາດ ແລະຫຼັກການລວມ ........................................ 13

ຮູບແບບວິທີການປັບປຸງຕົວຈິງ .............................................. 15

ບົດບາດໜ້າທີ່ຂອງໜ່ວຍ ຝສ (ລະດັບສູນກາງ) .............................. 17

ບົດບາດໜ້າທີ່ຂອງໜ່ວຍ ຝສ (ລະດັບສູນແຂວງ) ........................... 18

ບົດບາດໜ້າທີ່ຂອງໜ່ວຍ ຝສ (ລະດັບສູນເມືອງ) ............................ 19

ຮູບແບບກົນໄກການປະຕິບັດວຽກສົ່ງເສີມແຕ່ເມືອງລົງບ້ານ ........... 25

ລະບົບການສົ່ງເສີມຂັ້ນບ້ານ .................................................. 28

ພາກທີ 3 ລະບົບການຝຶກ_ສ້າງທີມນັກສົ່ງເສີມ (Generalist) ເພື່ອພາລະກິດສ້າງ (EVES) ........................................................ 35

ຂັ້ນຕອນວິທີການຝຶກ_ສົ່ງເສີມເພື່ອໃຫ້ທີມຄູຝຶກແຕ່ລະລະດັບໄດ້ປະຕິບັດ.........................................................................................39
ພື້ນຖານຄວາມຮູ້ຂອງນັກສົ່ງເສີມກະສິກຳ / ນັກພັດທະນາ.............43
ສຳລັບຊາວກະສິກອນ......................................................................45

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003












# ລະບົບ ແລະຂະບວນການສົ່ງເສີມກະສິກຳ ແລະປ່າໄມ້

## ບົດນຳ

ແນວທາງປ່ຽນແປງໃໝ່ຮອບດ້ານຂອງພັກ ແລະລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວປະຈຸບັນ ແມ່ນເນັ້ນໃສ່ເຮັດໃຫ້ແຂວງກາຍເປັນຫົວໜ່ວຍຍຸດທະສາດ ໃນການພັດທະນາເສດຖະກິດສັງຄົມຮອບດ້ານ, ເມືອງເປັນຫົວໜ່ວຍແຜນການ_ການເງິນ ແລະບ້ານເປັນຫົວໜ່ວຍການຈັດຕັ້ງປະຕິບັດເພື່ອປະກອບສ່ວນ ນຳເອົາປະເທດຊາດກ້າວໄປສູ່ການຫຼຸດພົ້ນຈາກຄວາມເປັນດ້ອຍພັດທະນາເທື່ອລະກ້າວ. ດັ່ງນັ້ນ, ການທີ່ຈະເຮັດໃຫ້ແນວທາງດັ່ງກ່າວຖືກຈັດຕັ້ງໃຫ້ປະກົດຜົນເປັນຈິງໄດ້ນັ້ນ, ມີຄວາມຈຳເປັນທີ່ທົ່ວພັກທົ່ວປວງຊົນ, ທຸກຂະແໜງການວິຊາສະເພາະ, ຕະຫຼອດຮອດປະຊາຊົນບັນດາເຜົ່າຕ້ອງໄດ້ຮ່ວມແຮງຮ່ວມໃຈສະໝານສະມັກຄີເປັນນ້ຳໜຶ່ງໃຈດຽວຈັດຕັ້ງປະຕິບັດພາລະບົດບາດ ແລະສິດໜ້າທີ່ຂອງຕົນໃນແຕ່ລະຂະແໜງການໃຫ້ເກີດປະສິດຕິຜົນແທ້ໆ.

ເປັນອັນຈະແຈ້ງແລ້ວວ່າມີພຽງແຕ່ການຮີບຮ້ອນເອົາໃຈໃສ່ພັດທະນາກຳລັງການຜະລິດຈາກສັງຄົມກະເສດຕະກຳທີ່ອີງໃສ່ທຳມະຊາດ ແລະເຄິ່ງທຳມະຊາດ ເພື່ອກ້າວໄປເປັນກຳລັງການຜະລິດທີ່ຂະຫຍາຍຕົວ, ມີວິທະຍາສາດເຕັກນິກ, ເຮັດໃຫ້ມີຜົນການຜະລິດສູງ, ມີຮູບແບບ ແລະລະບົບການຄຸ້ມຄອງການຜະລິດດີ ຈຶ່ງຈະເຮັດໃຫ້ລະດັບຊີວິດການເປັນຢູ່ ຂອງປວງຊົນທັງຊາດມີຄວາມອຸດົມສົມບູນ ແລະໃນທີ່ສຸດເປົ້າໝາຍອັນສູງສົ່ງຂອງພວກເຮົາຈຶ່ງຈະບັນລຸໄດ້.

ກອງສົ່ງເສີມກະສິກຳ ແລະປ່າໄມ້ຊຶ່ງເປັນຫົວໜ່ວຍວິຊາການໜຶ່ງ ມີບົດບາດຊຸກຍູ້ໃຫ້ບໍລິການວິຊາການ ແລະຈັດຕັ້ງນຳພາຊາວກະສິກອນ ເຮັດການຜະລິດກະສິກຳ ເພື່ອຄໍ້າປະກັນດ້ານສະບຽງອາຫານ ແລະຜະລິດ ໃຫ້ຫຼາຍກາຍເປັນສິນຄ້ານັບມື້ນັບຫຼາຍຂຶ້ນ, ດ້ວຍຈັ່ງຫວະການຂະຫຍາຍ ຕົວທີ່ໄວ ແລະມີຄວາມສອດຄ່ອງກັບທ່າແຮງທີ່ມີໃນແຕ່ລະທ້ອງຖິ່ນໃຫ້ມີ ຄວາມໜັກແໜ້ນ ແລະໝັ້ນຄົງຍາວນານ. ພາລະກິດອັນສູງສົ່ງນີ້ມັນໄດ້ຮຽກ ຮ້ອງໃຫ້ພະນັກງານ ແລະນັກສົ່ງເສີມໃນຂະແໜງການທຸກຄົນຕ້ອງໄດ້ ອອກແຮງປະຕິບັດບົດບາດ ແລະໜ້າທີ່ຢ່າງຫ້າວຫັນເພື່ອຍູ້ແຮງໃຫ້ກຳລັງຜູ້ ຜະລິດຕົວຈິງໃນ ຂອບເຂດທົ່ວປະເທດ ໄດ້ມີການຂະຫຍາຍຕົວ, ຢາກເຮັດ ໄດ້ແນວນັ້ນມີຄວາມຈຳເປັນຕ້ອງໄດ້ມີການຍົກສູງ ແລະປັບປຸງຄວາມຮູ້ ຄວາມສາມາດໃນການຜະລິດກະສິກຳຂຶ້ນ, ອອກແຮງປະສານສົມທົບລະ ຫວ່າງອົງການຈັດຕັ້ງລັດ, ເອກະຊົນ ແລະອົງການຈັດຕັ້ງສາກົນເພື່ອຮ່ວມ ກັນຊຸກຍູ້, ສົ່ງເສີມ ແລະຍູ້ແຮງຂະບວນການດັ່ງກ່າວໃຫ້ເປັນໄປຕາມທິດ ທາງນະໂຍບາຍການພັດທະນາສັງຄົມເສດຖະກິດຂອງພັກ / ລັດຖະບານທີ່ ຍາມໃດກໍ່ເນັ້ນໃຫ້ເກີດການມີສ່ວນຮ່ວມ ຂອງທຸກພາກສ່ວນເສດຖະກິດ, ເພາະບາງບັນຫາໃນການພັດທະນາມັນເປັນສິ່ງທີ່ໃຫຍ່ເກີນກວ່າຄວາມສາ ມາດຂອງພາກສ່ວນໃດພາກສ່ວນໜຶ່ງທີ່ຈະແກ້ໄຂໄດ້ພຽງຝ່າຍດຽວ.

ເອກະສານສະເໜີ ການປັບປຸງລະບົບ_ຮູບແບບ ການສົ່ງເສີມ ກະ ສິກຳ ແລະປ່າໄມ້ ນີ້ແມ່ນໄດ້ຮວບຮວມ ແລະສັງເຄາະເອົາບັນດາບົດຮຽນ ໃນການສົ່ງເສີມຂອງບັນດາໂຄງການພັດທະນາຕ່າງໆທີ່ໄດ້ປະກອບສ່ວນ ໃນຂະແໜງການຕົວຢ່າງເຊັ່ນ: PEP, FIAT, IPM, FLSP, WV, Etc <u>ໂດຍການສະໜັບສະໜູນຈາກ LEAP/SDC phase 1, NAFES, ໄດ້ປະ</u>






ກອບເປັນເອກະສານແນະນຳສະບັບນີ້ອອກມາເປັນທາງການ ເພື່ອຍູ້ແຮງໃຫ້ຂະບວນການສ້າງນັກສົ່ງເສີມຂັ້ນຕ່າງໆ ແລະລະບົບການສົ່ງເສີມຂັ້ນບ້ານ ໃຫ້ເກີດມີຂື້ນໃນທາງຮູບປະທຳ.

# ພາກທີ.1.
# ສະພາບລວມ ຂອງບັນຫາໃນວຽກງານການສົ່ງເສີມ ກປ

## 1. ບັນຫາທີ່ສຳຄັນດ້ານກະສິກຳ ແລະປ່າໄມ້ ຂອງ ສປປ ລາວ

ໃນສະພາວະຄວາມເປັນຈິງ, ເຖິງແມ່ນວ່າວຽກງານ ກະສິກຳ ເປັນອາຊີບຫຼັກຂອງ ສປປ ລາວ ກໍ່ຕາມແຕ່ບັນຫາໃນດ້ານກະສິກຳ ກໍ່ເປັນບັນຫາຫຼັກຂອງ ສປປ ລາວ ຄືກັນເພາະຊາວກະສິກອນເປັນຄົນກຸ່ມໃຫຍ່ຂອງປະເທດ ຊຶ່ງກວມເກືອບ 83% ດັ່ງນັ້ນການແກ້ໄຂບັນຫາທາງດ້ານ ກະສິກຳ ແລະປ່າໄມ້ ຈຶ່ງຕ້ອງອາໄສຄວາມຈິງໃຈ ແລະເຮັດຢ່າງຈິງຈັງຂອງທຸກຝ່າຍ ຮວມທັງຊາວກະສິກອນເອງ, ພະນັກງານຂອງລັດຈະຕ້ອງເປັນຜູ້ຊ່ວຍສຶກສາບັນຫາໃຫ້ເຫັນຊ່ອງທາງ ໃນການແກ້ໄຂທີ່ສອດຄ່ອງກັບຄວາມຕ້ອງການໃນແຕ່ລະໄລຍະ ພ້ອມທັງດຳເນີນການແກ້ໄຂບັນຫາຢ່າງຕໍ່ເນື່ອງ ແລະມີລະບົບ ຈຶ່ງຈະຊ່ວຍໃຫ້ເກີດຜົນດີຕໍ່ການຜະລິດກະສິກຳ ແລະປ່າໄມ້ ຂອງປະເທດ, ນັ້ນກໍ່ໝາຍເຖິງມີນິດໝາຍອັນດີໃນການແກ້ໄຂ ແລະປັບປຸງຊີວິດການເປັນຢູ່ຂອງຄົນກຸ່ມໃຫຍ່ຂອງປະເທດ. ບັນຫາດ້ານກະສິກຳ ທີ່ຈະກ່າວເຖິງຕໍ່ໄປນີ້ສາມາດຈຳແນກເປັນຂໍ້ໆດັ່ງນີ້:



ປະຕິບັດໃຫ້ຕໍ່ເນື່ອງຢ່າງນ້ອຍຕ້ອງພາຍໃນກຳນົດເວລາ 2 ລະດູການຜະລິດ ຫຼື 1 ປີ ຈຶ່ງຈະຄົບວົງຈອນການຮຽນຮູ້ໃນລະບົບສົ່ງເສີມທີ່ຖືເອົາການຝຶກອົບຮົມເປັນອັນບຸກເບີກແກ່ການພັດທະນາ (ຖ້າມີເງື່ອນໄຂອາດເພີ້ມເປັນ 3_4 ລະດູການຜະລິດຍິ່ງດີ)

- ຂະບວນການດັ່ງກ່າວນີ້ເປັນການເສີມສ້າງຂີດຄວາມສາມາດ ໃນການຜະລິດຂອງປະຊາຊົນ ແລະທັງເປັນການເສີມສ້າງຂີດຄວາມສາມາດໃນການປະຕິບັດໜ້າທີ່ການສົ່ງເສີມຂອງພະນັກງານເມືອງໄປພ້ອມກັນໃນທີ່ສຸດບຸກຄະລາກອນທີ່ສຳນານງານໃນຂະແໜງການ ຈຶ່ງຈະມີການເຕີບໂຕທັງປະລິມານ ແລະຄຸນນະພາບຂຶ້ນເລື້ອຍໆ. ເວລາໃດທີ່ແຕ່ລະຫ້ອງການ ກປ ເມືອງ ມີທີມງານເຮັດວຽກຝຶກ/ສົ່ງເສີມ ຕາມລະບົບດັ່ງກ່າວໄດ້ດີມີຄວາມເຂັ້ມແຂງ, ແນ່ນອນຕາໜ່າງການສົ່ງເສີມ ໃນຂອບເຂດທົ່ວປະເທດຍ່ອມມີຄວາມແໜ້ນໜາ. ການຊອກສະແຫວງຫາບັນດາເຕັກນິກ, ເຕັກໂນໂລຢີອັນໃໝ່, ໃນດ້ານໃໝ່ໆທີ່ກ່ຽວຂ້ອງກັບທັງໝົດຂະບວນການຜະລິດ_ການຕະຫຼາດຈາກຕາໜ່າງ ດັ່ງກ່າວກໍ່ຈະມີການພັດທະນາຕົວມັນເອງໄປຕະຫຼອດໂດຍສົມຄູ່ກັບຄວາມຕ້ອງການຂອງຜູ້ຜະລິດ ແລະຄວາມສາມາດຂອງນັກສົ່ງເສີມຂັ້ນເມືອງ ແລະແຂວງເຫຼົ່ານັ້ນເອງ.

## 3.3. ສຳລັບຊາວກະສິກອນ

ການຝຶກຊາວກະສິກອນ ແມ່ນຝຶກເພື່ອສ້າງຂະບວນການຮຽນຮູ້ທີ່ເປັນລະບົບ, ຄົບວົງຈອນສອດຄ່ອງກັບລະດູການຜະລິດໃນການນຳໃຊ້ບົດຮຽນທີ່ໄດ້ຮັບ໑

- ການຝຶກຈະຕ້ອງເລີ່ມຈາກການເນັ້ນໃສ່ການປ່ຽນທັດສະນະປູກຈິດສຳນຶກແບບໃໝ່: ສ້າງຄວາມເປັນເຈົ້າການ, ພັດທະນາຕົນເອງ, ເພິ່ງຕົນເອງກຸ້ມຕົນເອງໃຫ້ໄດ້ໂດຍພື້ນຖານ, ສົ່ງເສີມໃຫ້ແມ່ຍິງມີບົດບາດ ແລະມີສ່ວນຮ່ວມຫຼາຍຂຶ້ນ. ນອກນັ້ນກໍ່ຈະເປັນການເພີ້ມຄວາມຮູ້/ສາມາດພື້ນຖານດ້ານ: ການຈັດການບໍລິຫານກຸ່ມ. ສ່ວນທີ່ເຫຼືອກໍ່ຄືການເພີ້ມ ຫຼື ແນະນຳເຕັກນິກການຜະລິດທີ່ເໝາະສົມອັນໃໝ່ (ດ້ານປູກພືດ, ລ້ຽງສັດ, ການປະມົງ ແລະການຄຸ້ມຄອງນຳໃຊ້ລະບົບຊົນລະປະທານ...) ຕາມທີ່ຕ້ອງການຂອງແຕ່ລະກຸ່ມເປົ້າໝາຍ ແລະຕາມທ່າແຮງທີ່ມີຕົວຈິງ ໂດຍຮັບປະກັນໃຫ້ມີວິຊາການບ້ານໃນແຕ່ລະກຸ່ມນັ້ນໆ (ມີຂໍ້ແນະນຳການຝຶກ_ສົ່ງເສີມຊາວກະສິກອນລະອຽດ) ແຕ່ຕ້ອງໃຫ້ເກີດການນຳໃຊ້ເຕັກນິກ/ເຕັກໂນໂລຢີທີ່ໄດ້ແນະນຳເຂົ້າໃນການຜະລິດຕົວຈິງຂອງກຸ່ມ ແລະວິຊາການບ້ານທັງນີ້ກໍ່ແນໃສ່ໃຫ້ຕາໜ່າງການສົ່ງເສີມໃນບ້ານໄດ້ມີການເຄື່ອນໄຫວສືບຕໍ່ເອົາເອງໄດ້ເວລານັກສົ່ງເສີມຖອນຕົວອອກໄປ_ນັ້ນຄືການສ້າງຄວາມຍືນຍົງ_ເພິ່ງຕົນເອງໄດ້ ຂອງຊຸມຊົນໃນພື້ນຖານການຜະລິດ
- ການຝຶກ_ສົ່ງເສີມຊາວກະສິກອນຕ້ອງໃຫ້ຄົບວົງຈອນ (ເບິ່ງວົງຈອນການຝຶກຊາວກະສິກອນ) ແລະປະຕິບັດໃຫ້ທັນກັບລະດູການຜະລິດດ້ວຍ. ການຝຶກ_ສົ່ງເສີມຊາວກະສິກອນ ຖ້າເປັນໂຄງການລິເລີ້ມໜຶ່ງຕ້ອງ



### ກ. ບັນຫາດ້ານການຕະຫຼາດ

ສິ່ງນີ້ນັບວ່າເປັນບັນຫາທີ່ສຳຄັນຂອງກະສິກຳຊຶ່ງສາມາດໃຈ້ແຍກໄດ້ຄື:

- ລາຄາຜົນຜະລິດບໍ່ແນ່ນອນ
- ລາຄາສິນຄ້າກະສິກຳຖືກກຳນົດໂດຍຜູ້ຊື້
- ຂາດຂໍ້ມູນດ້ານການຕະຫຼາດທີ່ຖືກຕ້ອງຊັດເຈນຄົບຖ້ວນ ແລະທັນເວລາ
- ຜະລິດຕະພັນກະສິກຳຫຼາຍຊະນິດມີຄຸນນະພາບຕ່ຳບໍ່ໄດ້ມາດຕະຖານທີ່ຕະຫຼາດຕ້ອງການ
- ການເຂົ້າເຖິງຕະຫຼາດຖືກຈຳກັດ
- ຂາດຜູ້ຮັບຊື້ຜົນຜະລິດກະສິກຳທີ່ແນ່ນອນ

### ຂ. ຂາດປັດໃຈການຜະລິດ, ປັດໃຈການຜະລິດບໍ່ພຽບພ້ອມ

- ຊາວກະສິກອນສ່ວນໃຫຍ່ເປັນຊາວກະສິກອນຂະໜາດນ້ອຍ, ຂາດທຶນຮອນ
- ການຄົມມະນາຄົມຂົນສົ່ງບໍ່ສະດວກ ແລະລາຄາແພງ
- ການສະໜອງປັດໃຈການຜະລິດບໍ່ພຽງພໍ ແລະບໍ່ຕໍ່ເນື່ອງ
- ການເຂົ້າຮ່ວມຂອງພາກສ່ວນເອກະຊົນໃນການສະໜອງປັດໃຈການຜະລິດຍັງອ່ອນນ້ອຍ
- ເນື້ອທີ່ດິນເພື່ອທຳການຜະລິດບໍ່ພຽງພໍ ໂດຍສະເພາະໃນເຂດພູດອຍ

### ຄ. ຂາດເຕັກນິກ/ວິທີການ ແລະເຕັກໂນໂລຊີທີ່ເໝາະສົມສຳລັບສົ່ງເສີມ

- ຂາດຫຼັກວິຊາການ, ຂາດເຕັກນິກ ແລະໂຄງລ່າງໃນການຮອງຮັບຜົນຜະລິດ (Post- harvest technology)

- ຂາດເຕັກນິກທີ່ເໝາະສົມໃນການຊຸກຍູ້ສົ່ງເສີມ ທີ່ຈະຊ່ວຍໃຫ້ເພີ່ມລາຍໄດ້ແກ່ຊາວກະສິກອນ (Appropriate Technology leading to increase farmers income)
- ບຸກຄະລາກອນສົ່ງເສີມຂັ້ນເມືອງມີຈຳກັດ ແລະຂາດປະສົບປະການສຳລັບຖ່າຍທອດເຕັກນິກ ແລະເຕັກໂນໂລຊີ
- ຂາດການປະສານງານທີ່ດີລະຫວ່າງໜ່ວຍງານຕ່າງໆຂອງລັດ

## ງ. ບັນຫາກ່ຽວກັບຊາວກະສິກອນເອງ

- ການສຶກສາຂອງຊາວກະສິກອນໂດຍສ່ວນໃຫຍ່ຍັງຢູ່ໃນລະດັບຕ່ຳ
- ແນວຄິດຊາວນານ້ອຍ, ບໍ່ກ້າລົງທຶນ
- ມີໃສສະເພາະຕົວຂອງຊາວກະສິກອນເອງ, ຂາດຄວາມກະຕືລືລົ້ນໃນການຜະລິດ ເພື່ອເປັນສິນຄ້າ
- ຂາດການຈັດຕັ້ງລວມໝູ່ (ກຸ່ມ ຫຼືສະມາຄົມ)

## ຈ. ນະໂຍບາຍຂອງລັດຖະບານທີ່ມີຕໍ່ວຽກງານ ກປ

ເຖິງແມ່ນວ່າພັກ ແລະລັດຖະບານໄດ້ຖືເອົາວຽກງານກະສິກຳ ແລະປ່າໄມ້ເຂົ້າໃນໂຄງປະກອບໃນແຜນພັດທະນາ ເສດຖະກິດ_ສັງຄົມ ແຕ່ມາດຕາການສະໜັບສະໜູນຢ່າງຈິງຈັງຍັງບໍ່ທັນຄົບຖ້ວນ ແລະທົ່ວເຖິງ ເຊັ່ນ: ນະໂຍບາຍດອກເບ້ຍ, ນະໂຍບາຍໃນການກະຕຸກຊຸກຍູ້ການຜະລິດກະສິກຳ ແລະປ່າໄມ້, ການຮັບປະກັນລາຄາຜະລິດຕະພັນ ແລະອື່ນໆ.



### 3.2.2. ສິ່ງທີ່ນັກສົ່ງເສີມຕ້ອງມີເພື່ອຈັດຕັ້ງຂະບວນການສົ່ງເສີມແມ່ນທັກສະ ຫຼືຄວາມສຳນານ (skills) ໃນ:

- ການວິເຄາະບັນຫາການຜະລິດໃນສັງຄົມກະເສດຕະກຳຊົນນະບົດ
- ການກຳນົດຄວາມຕ້ອງການຝຶກອົບຮົມ ແລະ Skills ຕ່າງໆໃນດ້ານນັ້ນໆ
- ການກຳນົດຫຼັກສູດ ແລະກິດຈະກຳ/ເຄື່ອງມືການຝຶກ_ສົ່ງເສີມ
- ການນຳໃຊ້ເຕັກນິກການຝຶກແບບມີສ່ວນຮ່ວມ ແລະການອຳນວຍການສົນທະນາຕ່າງໆ
- ການຕິດຕາມ_ຊຸກຍູ້
- ການປະເມີນ_ແລກປ່ຽນປະສົບການ
- ການຂະຫຍາຍຜົນການຮຽນຮູ້ໃນຊຸມຊົນ

ຂະບວນການຝຶກ_ຊຸກຍູ້ສົ່ງເສີມມີການສືບຕໍ່
ແລະປັບປຸງໄປເລື້ອຍໆຕາມລະດູການຜະລິດ ແລະປະເພດການຜະລິດ

## 3.2. ພື້ນຖານຄວາມຮູ້ຂອງນັກສົ່ງເສີມກະສິກຳ/ນັກພັດທະນາ

**(Basic Knowledge to work as generalist)**

### 3.2.1. ສັງລວມຫົວຂໍ້ຕົ້ນຕໍໃນການຝຶກ ຄູຝຶກດ້ານ ການສົ່ງເສີມ ກະສິກຳ ແລະ ປ່າໄມ້ ເພື່ອເພີ່ມຄວາມຮູ້ (Knowledge)

- ນະໂຍບາຍ ແລະທິດທາງກ່ຽວຂ້ອງກັບການສົ່ງເສີມກະສິກຳ ແລະປ່າໄມ້/ການພັດທະນາ →→→
- ແນວຄວາມຄິດຂັ້ນຕອນ → ວິທີ່ການພັດທະນາແບບໃໝ່_ຕາມແນວທາງປ່ວງຊົນວິທີການພັດທະນາກຸ່ມຜູ້ຜະລິດ/ບໍລິການ →→→ ວິຊາການບ້ານ, ບົດບາດຍິງ_ຊາຍ ໃນການພັດທະນາຊຸມຊົນ →→
- ຫຼັກການ, ຂັ້ນຕອນ ແລະເຕັກນິກການສົ່ງເສີມ_ການຝຶກອົບຮົມແບບມີສ່ວນຮ່ວມ. →→→
- ບັນດາຄວາມຮູ້, ເຄື່ອງມືຕ່າງໆໃນການປະຕິບັດວຽກງານການສົ່ງເສີມໃຫ້ມີປະສິດຕິພາບ →→→
- ບົດບາດ_ໜ້າທີ່ (ນັກສົ່ງເສີມ/ນັກພັດທະນາ) ແລະການຄຸ້ມຄອງໂຄງການສົ່ງເສີມ →→
- ວິທີການວິເຄາະ ແລະວາງແຜນການຊຸກຍູ້ສົ່ງເສີມ_ຝຶກອົບຮົມຕົວຈິງໃຫ້ກຸ່ມເປົ້າໝາຍ →→→
- ☺ ວິທີການຈັດຕັ້ງປະຕິບັດແຜນ-ການຕິດຕາມຊຸກຍູ້ (ແຂວງ, ເມືອງ ແລະຊາວກະສິກອນ) ☺
- ວິທີການປະເມີນຜົນ ແລະຖອດຖອນບົດຮຽນ ແລະການຜັນຂະຫຍາຍຜົນໃຫ້ກວ້າງຂວາງ
- ພື້ນຖານເຕັກນິກການຜລິດອື່ນໆທີ່ຈຳເປັນຕາມຄວາມຕອ້ງການລວມທັງການ ສົ່ງເສີມດ້ານການປຸງແຕ່ງ, ດ້ານສິນເຊື່ອເພື່ອການຜະລິດ ແລະການຕະຫຼາດຕ່າງໆ

ແຕ່ລະຫົວຂໍ້ໃຫຍ່ເທິງນີ້ ໃນລາຍລະອຽດຂອງຫຼັກສູດຈະມີຫົວຂໍ້ຍ່ອຍສະເພາະ.



## ສ. ບັນຫາໃນການປະຕິບັດບົດບາດໜ້າທີ່

ຈາກຜົນການສຶກສາສະພາວະຄວາມເປັນຈິງ ແລະການຕີລາຄາຄືນຢ່າງຮອບດ້ານສາມາດສັງຣວມບັນຫາທີ່ເປັນສິ່ງພົວພັນກັບການຈັດຕັ້ງປະຕິບັດບົດບາດໜ້າທີ່ການສົ່ງເສີມທີ່ແຕ່ລະຂັ້ນການຄຸ້ມຄອງແມ່ນ:

- ເຖິງມີການສ້າງຕັ້ງກອງຂັ້ນສູນກາງ, ແຂວງ ແລະເມືອງ ຊຶ່ງປະກອບດ້ວຍພາລະບົດບາດແລ້ວກໍ່ຕາມ, ແຕ່ກໍ່ຍັງເຫັນວ່າມີອັນຄຸມເຄືອກັນ ແລະການຈັດຕັ້ງປະຕິບັດກິດຈະກຳການສົ່ງເສີມຕົວຈິງແມ່ນຍັງດຳເນີນຕາມສາຍຕັ້ງຂອງຂະແໜງການ, ທັງນີ້ກໍ່ເນື່ອງຈາກວ່າສາຍໃຍຄຸ້ມຄອງ ໃນພາກຕົວຈິງຢຸດຈຶ້ງຢູ່ທີ່ຂັ້ນແຂວງ
- ພາລະບົດບາດຂອງກອງຂັ້ນແຂວງ ເບິ່ງໃສ່ຄຳສັ່ງ 0172/ກປ ຍັງເຫັນວ່າມີຫຼາຍຢ່າງທີ່ເປັນໜ້າທີ່ ແລະວຽກຂອງຫ້ອງການ ກປ ເມືອງ ຕ້ອງເຮັດຖ້າເບິ່ງໃສ່ ຄຳສັ່ງ 1929/ກປ ແລະດຳລັດ 01/ນຍ
- ການປະຕິບັດວຽກຂອງພະນັກງານກອງຂັ້ນແຂວງແມ່ນຍັງເປັນວຽກທີ່ຕິດພັນກັບວຽກຂະແໜງການທີ່ມີມາກ່ອນ; ທີ່ເຮັດໄດ້ກໍ່ແອບແປະນຳວຽກ ແລະງົບປະມານຂອງຂະແໜງການເກົ່າ ຫຼືໄດ້ໂອນໃຫ້ທັງນີ້ກໍ່ຍ້ອນຄວາມເຂົ້າໃຈໃນວິທີຈັດຕັ້ງປະຕິບັດພາລະບົດບາດຕົວຈິງຂອງກອງຂັ້ນແຂວງ ແມ່ນຍັງຄຸມເຄືອ, ບໍ່ໄດ້ມີການຈັດລຽງໃຫ້ບຸລິມະສິດວຽກ ໃດກ່ອນໃດລຸນ
- ທຸກແຂວງຍັງເຫັນວ່າມີການຈັ້ງທ່າ / ລໍຖ້າເບິ່ງຄຳສັ່ງ ແລະຂໍ້ແນະນຳຕ່າງໆຈາກສູນກາງ, ຍັງບໍ່ທັນເຫັນໄດ້ຄວາມເປັນເຈົ້າການ ແລະປະດິດສ້າງທີ່ສະແດງອອກທາງຮູບປະທຳໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຕາມພາລະບົດບາດຂອງກອງຂັ້ນຕົນຮັບຜິດຊອບເປັນອັນຕັ້ງ

ໜ້າຊັດເຈນພໍເທົ່າໃດ

- ການປະສານສົມທົບລະຫວ່າງກອງຂັ້ນແຂວງ ແລະຫ້ອງການ ກປ ເມືອງ ໃນດ້ານການປະຕິບັດກິດຈະກຳສົ່ງເສີມ ຕ່າງໆບົນພື້ນຖານພາລະບົດບາດຂອງແຕ່ລະຝ່າຍນັ້ນຍັງມີນ້ອຍທີ່ສຸດ, ສິ່ງທີ່ໄດ້ປະຕິບັດຜ່ານມາກໍ່ເປັນພຽງແຕ່ການລົງຕິດຕາມວຽກໂຄງການຈຳນວນໜຶ່ງເທົ່ານັ້ນ
- ເຖິງວ່າພະແນກມີຄວາມຫ່ວງໃຍພະຍາຍາມຈັດຕັ້ງ, ຊີ້ນຳວຽກກອງສົ່ງເສີມ, ແຕ່ກໍ່ຍັງນອນໃນຮູບແບບລວມໆສ່ວນໃຫຍ່ຂອງວຽກທີ່ປະຕິບັດກໍ່ເປັນການຕິດພັນແອບແປະກັບຂະແໜງການວິຊາການອື່ນ, ຍັງບໍ່ທັນເຫັນ ຄວາມພະຍາຍາມຍາກຍົກສູງໃຫ້ວຽກ / ພາລະບົດບາດ ຂອງການສົ່ງເສີມມີຄວາມໜັກແໜ້ນເປັນກຳລັງແຮງສັງຮວມ ຂອງການພັດທະນາຂະແໜງການຕົນແທ້ໆເທື່ອ
- ຮູບແບບ/ວິທີການປະຕິບັດວຽກສົ່ງເສີມຂອງຫ້ອງການ ກປ ເມືອງ ແມ່ນຍັງນອນໃນຮູບການລົງເຜີຍແຜ່ມະຕິຄຳສັ່ງ/ຄາດໝາຍສູ້ຊົນຂອງແຂວງເມືອງໂດຍໃຊ້ການລະດົມຊຸກຍູ້ໃຫ້ບ້ານ/ຊາວກະສິກອນຈັດຕັ້ງປະຕິບັດຕາມເງື່ອນໄຂທ້ອງຖິ່ນ, ແຕ່ກໍ່ເຮັດໄດ້ຢູ່ພຽງບາງເຂດ ແລະບາງບ້ານ. ສ່ວນການເຜີຍແຜ່ເຕັກນິກ/ວິທີການຜະລິດອັນໃໝ່ໃຫ້ຊາວກະສິກອນແມ່ນຍັງແບບເດີມໆ_ເຜີຍແຜ່ເອກະສານເຕັກນິກລວມໆຂອງການລົງຊຸກຍູ້ການຜະລິດລະດູແລ້ງ_ລະດູຝົນ ແລະຕ້ານແລ້ງ, ຕ້ານນ້ຳຖ້ວມ ຫຼືວ່າບ່ອນໃດມີບັນຫາສະເໜີຂຶ້ນມາຈຶ່ງລົງໄປຕິດຕາມຕີລາຄາໃຫ້ຄຳແນະນຳຕາມສາຂາວິຊາສະເພາະໃຜລາວ ແລະຕາມເງື່ອນໄຂງົບປະມານ ແລະພາຫະນະທີ່ມີ ແລະຫາໄດ້





ຜະລິດນັ້ນໂລດ. ໝາຍວ່າວິທີຈັດຕັ້ງ ປະຕິບັດຂະບວນການຕົວຈິງຕາມຫຼັກສູດການສ້າງ (Generalist) ສາມາດປັບໃຊ້ໄດ້, ພຽງແຕ່ໃຫ້ຄືບເນື້ອໃນພື້ນຖານທີ່ສຳຄັນດັ່ງໄດ້ລະບຸໃນຫຼັກສູດ. ໃນວິທີດັ່ງກ່າວນີ້ການຕິດຕາມຊຸກຍູ້, ໃຫ້ການແນະນຳກັບທີ່ຈາກທີມຄູຝຶກຂັ້ນຖັດຂື້ນໄປນັ້ນຕ້ອງໄດ້ເອົາໃຈໃສ່ເປັນພິເສດ.

<u>ໝາຍເຫດ</u>: ການນຳໃຊ້ຮູບແບບ/ລະບົບການຝຶກ_ສົ່ງເສີມ ອັນນີ້, ທີມສູນກາງໃນຊ່ວງຕົ້ນຕ້ອງເປັນຝ່າຍຈັດຕັ້ງປະຕິບັດສ້າງຄວາມເຂັ້ມແຂງໃຫ້ທີມແຂວງ ແລະບາງເມືອງທີ່ເປັນໂຄງການລິເລີ່ມ ແຕ່ເມື່ອໃດມີທີມແຂວງ ຖືກຈັດຕັ້ງຂຶ້ນ ແລະຜ່ານຂະບວນການແລ້ວ, ທີມດັ່ງກ່າວຕ້ອງໄດ້ຊອກເງື່ອນໄຂເພື່ອເຮັດໜ້າທີ່ຜັນຂະຫຍາຍໄປສູ່ເມືອງອື່ນໆ ຫຼືທີມງານອື່ນໆເອົາເອງ. ທັງນີ້ກໍ່ເພື່ອໃຫ້ເມືອງໄດ້ເຮັດໜ້າທີ່ສົ່ງເສີມຕົວຈິງໄດ້ຢ່າງມີປະສິດຕິພາບ_ມີຕາໜ່າງການສົ່ງເສີມ ຂັ້ນພື້ນຖານການຜະລິດທີ່ເຂັ້ມແຂງ.

ສ່ວນພາກສ່ວນສູນກາງກໍ່ສືບຕໍ່ເຮັດໜ້າທີ່ ຄົ້ນຄິດຫາຮູບແບບວິທີການສົ່ງເສີມອັນໃໝ່ທີ່ສອດຄ່ອງ / ທ່ວງທັນກັບລະດັບການຂະຫຍາຍຕົວຂອງເສດຖະກິດ_ສັງຄົມກະເສດຕະກຳຊົນນະບົດຂອງປະເທດ, ສືບຕໍ່ພັດທະນາປັບປຸງຫົວຂໍ້, ເນື້ອໃນ, ສື່/ອຸປະກອນ ຂໍ້ມູນຂ່າວສານອັນໃໝ່ຕໍ່ໄປເລື້ອຍໆ.



## 1.2. <u>ຂໍ້ຈຳກັດ</u>

- ກອງຂັ້ນ ແຂວງຕັ້ງໃໝ່ ພະນັກງານທີ່ສຳນານງານດ້ານສົ່ງເສີມມີນ້ອຍ, ເງື່ອນໄຂພາຫະນະ, ອຸປະກອນ ແລະງົບປະມານມີຈຳກັດ, ແຕ່ຂອບເຂດຮັບຜິດຊອຍກວ້າງຂວາງ
- ບໍ່ມີຂໍ້ແນະນຳລະອຽດດ້ານວິທີການຜັນຂະຫຍາຍຈັດຕັ້ງປະຕິບັດພາລະບົດບາດ
- ງົບປະມານສົ່ງເສີມປະຈຳລະດູການຜະລິດຂອງຫ້ອງການ ກປ ເມືອງມີນ້ອຍ ຫຼືບໍ່ໄດ້ເລີຍໃນບາງປີ. ດັ່ງນັ້ນ, ການລົງເຮັດວຽກມີພຽງແຕ່ອີງໃສ່ເງິນບໍລິຫານຫ້ອງການ
- ພາຫະນະ/ເຄື່ອງມືຮັບໃຊ້ການສົ່ງເສີມຕົວຈິງຂອງແຕ່ລະເມືອງມີຈຳກັດຫຼາຍ (ເຖິງວ່າຄວາມຫ່ວງໃຍມີຫຼາຍແຕ່ເງື່ອນໄຂວິທີການເຮັດວຽກແທ້ໆບໍ່ມີພໍເທົ່າໃດ)
- ຄວາມຮູ້/ຄວາມສຳນານງານຂອງພະນັກງານກະສິກຳ ເມືອງ ດ້ານຮູບແບບວິທີການສົ່ງເສີມຍັງມີຈຳກັດຫຼາຍທີ່ສຸດ.

## 1.3. <u>ສິ່ງທີ່ແປັນຄວາມສ່ຽງ</u>

- ຈາກຜົນການປະຕິບັດບົດບາດໜ້າທີ່ ແລະບັນຫາທີ່ສັງຮວມໄດ້ນີ້ເຫັນວ່າອົງການຈັດຕັ້ງໃນຂັ້ນແຂວງ ແລະເມືອງ ເກີດການຄອງຄອຍຊຶ່ງກັນແລະກັນ, ຊຶ່ງອາດກໍ່ໃຫ້ເກີດການຂາດຄວາມເຊື່ອໝັ້ນໃນສາຍຕັ້ງການຄຸ້ມຄອງວຽກສົ່ງເສີມ ແລະນຳໄປເຖິງການຂາດຄວາມສັກສິດຂອງພາລະບົດບາດທີ່ມີ, ໃນທີ່ສຸດວຽກງານການສົ່ງເສີມຖືກປັບປຸງຊ້າ ຫຼືບໍ່ໄດ້ຖືກປັບປຸງພໍເທົ່າໃດ

- ເມື່ອເກີດຄວາມຊັກຊ້າໃນການກຳນົດແຈ້ງໜ້າທີ່ ແລະຄວາມຮັບຜິດຊອບໃນທາງປະຕິບັດຕົວຈິງຂອງແຕ່ລະຂັ້ນການຄຸ້ມຄອງ_ເມືອງ, ແຂວງ, ສູນກາງ ຫຼືແມ່ນແຕ່ສິ່ງທີ່ມີຢູ່ແລ້ວແຕ່ຍັງບໍ່ໄດ້ເຄື່ອນໄຫວດີພໍ ກໍ່ໝາຍວ່າລະບົບການສົ່ງເສີມທີ່ມີຢູ່ນີ້ອ່ອນແອ, ແນ່ນອນການກະຈາຍເຕັກໂນໂລຢີ/ເຕັກນິກວິທີການ ແລະຄວາມຮູ້ ຄວາມສາມາດ ໃນການຜະລິດ ແລະຄຸ້ມຄອງການຜະລິດໄປຫາຊາວກະສິກອນກໍ່ມີທ່ອງທ່າຢຸດຈັ້ງ, ໃນທີ່ສຸດກໍ່ຈະເກີດການຄອງຄອຍຂອງປະຊາຊົນໄປເຖິງການເຊື່ອມສັດທາຕໍ່ລະບົບການຊຸກຍູ້ບໍລິການວິຊາການ ຈາກເບື້ອງລັດໂດຍລວມ
- ຜົນຈາກການຄອງຄອຍຂອງພື້ນຖານ, ຈາກຄວາມບໍ່ໜັກແໜ້ນ ໃນການປະຕິບັດບົດບາດໜ້າທີ່ຂອງ ກອງຂັ້ນສູນກາງ, ແຂວງ ແລະຫ້ອງການ ກປ ເມືອງ, ຂະບວນການຫັນປ່ຽນແບບແຜນການຜະລິດ ແບບຂຶ້ນກັບທຳມະຊາດ ແລະເຄິ່ງທຳມະຊາດ ຫຼືການຜະລິດແບບປະຖົມປະຖານຂອງປະຊາຊົນບັນດາເຜົ່າແມ່ນຍັງຈະຮັກສາຈັ່ງຫວະທີ່ຊັກຊ້າທີ່ສຸດ_ແນ່ນອນຄາດໝາຍສູ້ຊົນໃນການຫຼຸດຜ່ອນຄວາມທຸກຈົນ ແລະການຫຼຸດພົ້ນ ຈາກປະເທດດ້ອຍພັດທະນາກໍ່ເປັນໄປໄດ້ຍາກໃນທາງຮູບປະທຳ.

ດັ່ງນັ້ນຈຶ່ງເຫັນໄດ້ວ່າເຖິງເວລາແລ້ວທີ່ຕ້ອງໄດ້ໃຫ້ບຸລິມະສິດ, ຮ່ວມມືກັນ ໃນການພັດທະນາ ແລະປັບປຸງລະບົບ_ຮູບແບບ ການສົ່ງເສີມກະສິກຳ ແລະ ປ່າໄມ້ ຂື້ນໃຫ້ໄດ້ໃນທາງຮູບປະທຳ.



ກໍລະນີຫາກເປັນເມືອງ ຫຼືເປັນໂຄງການທີ່ໄດ້ຜ່ານຂະບວນການຈັດຕັ້ງປະຕິບັດມາກ່ອນ ແລ້ວແມ່ນເນັ້ນໃສ່ການຈັດຝຶກແບບທົບທວນຄືນ (Refreshment Course) ເນັ້ນການປະເມີນ ຕີລາຄາຜົນໄດ້ຮັບທຽບໃສ່ຄາດໝາຍວາງໄວ້, ວິທີປະຕິບັດຕົວຈິງແລ້ວອັດສີດເພີ່ມຄວາມຮູ້ ແລະຄວາມສາມາດທີ່ສະເພາະເຈາະຈົງກັບບັນຫາທີ່ຕ້ອງໄດ້ແກ້ໄຂຢ່າງໜ້ອຍປີລະ 1 ຄັ້ງ ໃນທຸກລະດັບຂັ້ນການຄຸ້ມຄອງວຽກງານສົ່ງເສີມ (ສູນກາງ, ແຂວງ ແລະເມືອງ).

---

ໃນກໍລະນີນຶ່ງ, ຫາກເຫັນວ່າສະພາບງົບປະມານມີຈຳກັດ, ແຕ່ລະດັບວິຊາສະເພາະ, ປະສົບການ ແລະຄວາມຄ່ອງຕົວ (ອີງໃສ່ TNA) ຂອງພະນັກງານກະສິກຳເມືອງ ໃນການເຮັດວຽກຝຶກ_ສົ່ງເສີມ ມີໃນລະດັບທີ່ບໍ່ດີເທົ່າໃດກໍ່ອາດສາມາດດັດປັບຈັດຝຶກເປັນ 2 ຄັ້ງ ໃນຊ່ວງກ່ອນ ແລະຫຼັງລະດູການຜະລິດແລ້ວສ້າງເງື່ອນໄຂ, ໃຫ້ໂອກາດໄປຈັດຕັ້ງຊຸກຍູ້ສົ່ງເສີມຊາວກະສິກອນຕົວຈິງໃນລະດູການຜະລິດນັ້ນໂລດ. ໃນວິທີດັ່ງກ່າວນີ້ການຕິດຕາມຊຸກຍູ້, ໃຫ້ການແນະນຳກັບທີ່ຈາກທີມຄູຝຶກຂັ້ນຖັດຂື້ນໄປນັ້ນຕ້ອງໄດ້ເອົາໃຈໃສ່ພໍສົມຄວນ.

---

ອີກປະການໜຶ່ງ, ຫາກເຫັນວ່າສະພາບງົບປະມານມີຈຳກັດ, ແຕ່ລະດັບວິຊາສະເພາະ, ປະສົບການ ແລະຄວາມຄ່ອງຕົວ (ອີງໃສ່ TNA) ຂອງພະນັກງານກະສິກຳເມືອງ ໃນການເຮັດວຽກຝຶກ_ສົ່ງເສີມມີໃນລະດັບໃດໜຶ່ງແລ້ວກໍ່ອາດສາມາດດັດປັບຈັດຝຶກເປັນລອດດຽວ 1 ຄັ້ງ ໃຊ້ເວລາປະມານ 10_15 ວັນ ໃນຊ່ວງກ່ອນດູການຜະລິດແລ້ວສ້າງເງື່ອນໄຂ, ໃຫ້ໂອກາດໄປຈັດຕັ້ງຊຸກຍູ້ສົ່ງເສີມຊາວກະສິກອນຕົວຈິງຕະຫຼອດລະດູການ

## 3.1. ຂັ້ນຕອນວິທີການຝຶກ _ ສົ່ງເສີມເພື່ອໃຫ້ທີມຄູຝຶກແຕ່ລະລະດັບໄດ້ປະຕິບັດ

### 3.1.1. ສຳລັບຄູຝຶກ_ນັກສົ່ງເສີມໃນກົມໃກລັດ (ກໍລະນີເປັນເຂດຈຸດສຸມ ຫຼືໂຄງການລິເລີ່ມໃໝ່)

ການຝຶກວິຊາພື້ນຖານ (Basic courses) ແກ່ຄູຝຶກລະດັບແຂວງ / ເມືອງ ຄວນໃຫ້ຝຶກເປັນທີມ (ວິຊາການປູກຝັງ, ລ້ຽງສັດ, ຊົນລະປະທານ...), ໂດຍຈັດໃຫ້ມີການຝຶກຂັ້ນພື້ນຖານເປັນ 3 ຄັ້ງ (Tr1/Tr2/Tr3_ຂະຫຍາຍຜົນ) ມີຫຼັກສູດ ແລະເອກະສານຝຶກລະອຽດພາຍໃນກຳນົດເວລາ 2 ລະດູການຜະລິດ ຫຼືນຶ່ງປີ (ມີຕາຕະລາງເວລາການຝຶກລະອຽດຕື່ມ) ແລະທັງໃຫ້ໂອກາດປະຕິບັດຈິງໃນການຝຶກ_ຕິດຕາມຊຸກຍູ້ຂະບວນການຝຶກ_ສົ່ງເສີມຊາວກະສິກອນ ທີ່ທຳການຜະລິດ ແລະຈັດຕັ້ງ / ປັບປຸງກຸ່ມຜູ້ຜະລິດ, ວິຊາການບ້ານ ຢູ່ໂຄງການລິເລີ່ມ ຢ່າງໜ້ອຍຕະຫຼອດລະດູການຜະລິດນັ້ນໆ (ຖ້າຍັງບໍ່ໝັ້ນໃຈ ແລະມີເງື່ອນໄຂອາດເພີ່ມເປັນ 3_4 ລະດູການຜະລິດ ຫຼື 2 ປີ ຍິ່ງເປັນການດີ).

---

ທຸກຫົວຂໍ້ ແລະເນື້ອໃນການຝຶກພື້ນຖານສຳລັບສ້າງທີມຄູຝຶກ_ນັກສົ່ງເສີມ ກະສິກຳ ແມ່ນແນໃສ່ເຮັດໃຫ້ສາມາດປະຕິບັດໄດ້ ບົດບາດ ໜ້າທີ່ຄູຝຶກ_ນັກພັດທະນາ_ນັກສົ່ງເສີມໃນວຽກງານກະສິກຳໃຫ້ແກ່ຊາວກະສິກອນ. ສ່ວນວິຊາສະເພາະພື້ນຖານ (Technical subjects) ຂອງແຕ່ລະວິຊາການນັ້ນກໍ່ຕ້ອງປະສານກັບກົມ / ກອງ ແລະຂະແໜງກ່ຽວຂ້ອງ (SMS) ໃຫ້ການຝຶກອົບຮົມຕາມຄວາມຕ້ອງການຕົວຈິງຕື່ມຕ່າງຫາກຕາມບົດບາດໜ້າທີ່ປົກກະຕິຂອງກົມ / ກອງ ແລະຂະແໜງການເຫຼົ່ານັ້ນ ແລະຕາມໂອກາດຄວາມຕ້ອງການຕົວຈິງທີ່ເໝາະສົມ.





# ພາກທີ.2.
# ທາງເລືອກໃນການປັບປຸງແລະພັດທະນາລະບົບການສົ່ງເສີມ ກະສິກຳ

ຕາມຫຼັກການປະຕິບັດວຽກການສົ່ງເສີມ ກະສິກຳ ແລະປ່າໄມ້ ແມ່ນ:

- ສອນໃຫ້ຊາວກະສິກອນຮູ້ຈັກຊ່ວຍຕົນເອງ, ໃຫ້ເຂົາສາມາດນຳໃຊ້ເຕັກໂນໂລຊີ ໃຫ້ເຂົ້າກັບສະພາບ ເງື່ອນໄຂ ແລະຊັບພະຍາກອນທີ່ເຂົາມີ
- ຖ່າຍທອດເຕັກນິກ, ເຕັກໂນໂລຊີຈາກຜົນສຳເລັດຂອງການຄົ້ນຄວ້າທົດລອງ ແລະຂໍ້ມູນຂ່າວສານກ່ຽວກັບການຜະລິດກະສິກຳ ແລະປ່າໄມ ແລະຂອງພາກສ່ວນທີ່ປິ່ນອ້ອມ.
- ໃຫ້ການປຶກສາ ແລະບໍລິການດ້ານເຕັກນິກວິຊາການ

ດັ່ງນັ້ນ, ການພັດທະນາກຳລັງການຜະລິດ ໃນພາກກະເສດຕະກຳສາມາດເວົ້າໄດ້ວ່າທຸກພາກສ່ວນມີຄວາມສຳຄັນ ຊຶ່ງຄວາມເປັນຈິງກໍ່ເປັນເຊັ່ນນັ້ນ, ແຕ່ຢ່າງໃດກໍ່ດີ ບົນພື້ນຖານພາລະບົດບາດ ແລະຂອບເຂດສິດໜ້າທີ່ໆໄດ້ຮັບມອບໝາຍເຫັນໄດ້ວ່າວຽກງານ ສົ່ງເສີມ ໃນທຸກລະດັບມີຄວາມຈຳເປັນຕ້ອງໄດ້ຍົກສູງ ແລະປັບປຸງແບບແຜນວິທີດຳເນີນວຽກງານໃຫ້ມີຄວາມສອດຄ່ອງກັບສະພາບຄວາມຕ້ອງການຕົວຈິງຂອງຊາວກະສິກອນ ກໍ່ຄືສະພາບການປ່ຽນແປງໃໝ່ຮອບດ້ານໃນທົ່ວສັງຄົມຂອງປະເທດໂດຍເລີ່ມຈາກການມີວິໄສທັດ, ກອບຄວາມຄິດໃນການຈັດຕັ້ງປະຕິບັດ ແລະແນວວິທີການປັບປຸງທີ່ແທດເໝາະກັບຄວາມເປັນຈິງ ໃຫ້ມີລັກສະນະວິທະຍາສາດ, ມີທ່າກ້າວຂະຫຍາຍ (dynamic) ເທົ່ານັ້ນຈຶ່ງຈະສາມາດຊ່ວຍເຫຼືອຊາວກະສິກອນບັນດາເຜົ່າໃຫ້ຫຼຸດພົ້ນອອກຈາກພາວະຄວາມບໍ່ຮູ້ ແລະ

ຄວາມທຸ້ກຍາກຈົນໃນການຜະລິດກະສິກຳເປັນກ້າວໆ ຂື້ນໄດ້.

ການຍູ້ແຮງເຮັດໃຫ້ແຂວງ ແລະເມືອງ ມີກອບຄວາມຄິດ ໃນແນວວິທີດຳເນີນການປັບປຸງ ແລະຈັດຕັ້ງປະຕິບັດວຽກງານການສົ່ງເສີມໃຫ້ຖືກຕ້ອງສອດຄ່ອງກັບສະພາວະຄວາມເປັນຈິງ ແລະຄວາມຕ້ອງການໃນໄລຍະໃໝ່ຈຶ່ງຄວນຖືເປັນວຽກບຸລິມະສິດຢ່າງໜຶ່ງໃນເງື່ອນໄຂປະຈຸບັນດັ່ງລາຍລະອຽດລຸ່ມຄື:

## 2.1. ດ້ານຍຸດທະສາດ ແລະຫຼັກການລວມ

ກ. ຕ້ອງເຮັດໃຫ້ ພະນັກງານຄຸ້ມຄອງວຽກ ສົ່ງເສີມ ຮວມທັງຜູ້ປະບັດຕົວຈິງມີຄວາມເຂົ້າໃຈຕໍ່ເປົ້າໝາຍ ແລະໜ້າທີ່ຂອງການສົ່ງເສີມເພື່ອ:

- ເຮັດໃຫ້ຊາວກະສິກອນຜູ້ຜະລິດສາມາດກຳນົດຮູບແບບ ການຜະລິດຂອງຕົນ (ຄອບຄົວ) ຂອງຊຸມຊົນກໍ່ຄືຂອງກຸ່ມຜະລິດ ຂອງຕົນໄດ້ສອດຄ່ອງແທດເໝາະກັບຊັບພະຍາກອນທີ່ມີ ແລະຮັບປະກັນປະສິດຕິຜົນສູງທີ່ສຸດ
- ເຮັດໃຫ້ເກີດມີຕາໜ່າງການຄຸ້ມຄອງປະສານງານ ໃນວຽກງານການສົ່ງເສີມ ໃນທົ່ວປະເທດມີຄວາມຄ່ອງຕົວຮັບປະກັນການຈັດຕັ້ງປະຕິບັດຕົວຈິງໄດ້ ແລະໝັ້ນຄົງຍາວນານ.

ສອງຢ່າງທີ່ກ່າວເທິງນີ້ຄວນຖືເປັນເປົ້າໝາຍອັນສຳຄັນໃນວຽກງານການສົ່ງເສີມ ຫຼືການປັບປຸງວຽກງານການສົ່ງເສີ ຂອງຂະແໜງການພວກເຮົາ.



ຮູບສະແດງ

ແຜນວາດການຖ່າຍທອດຄວາມຮູ້ສູ່ພື້ນຖານການຜະລິດ



ເປັນຈັງຫວະດຽວກັນເຂົ້າຕື່ມເຊັ່ນ (ນະໂຍບາຍຊັດເຈນ, ງົບປະມານສຳລັບການຝຶກ_ສົ່ງເສີມພຽງພໍ, ທຶນກໍ່ສ້າງສ້ອມແປງລະບົບໂຄງລ່າງພື້ນຖານກະສິກຳ (ອາດເປັນທຶນກູ້ຢືມກໍ່ໄດ້), ປັດໃຈການຜະລິດ, ລະບົບຂໍ້ມູນຂ່າວສານ ແລະຕະຫຼາດຮອງຮັບ...) ກໍ່ເປັນການຍາກທີ່ຈະບັນລຸປະສິດທິຜົນສູງສຸດໄດ້.

ການຖືສຳຄັນການຄັດເລືອກ ແລະສ້າງເອົາຄູຝຶກໃຫ້ໄດ້ໃກ້ຄຽງກັບມາດຕະຖານທີ່ສຸດ ແລະມີຄວາມສະໝັກຢາກເປັນນັກພັດທະນາ, ເປັນຄູຝຶກ_ນັກສົ່ງເສີມແມ່ນເປັນອັນກົກ.

ຖືການເຮັດວຽກເປັນທີມໃນທຸກລະດັບມີການຊີ້ນຳຈິງຈັງເປັນຫົວໃຈສຳຄັນ

ຈັດຕັ້ງ/ຮັກສາ/ບຳລຸງສ້າງໃຫ້ມີທີມຄູຝຶກ_ສົ່ງເສີມທີ່ດີ_ເກັ່ງໃນແຕ່ລະລະດັບ ເພື່ອເຮັດໜ້າທີ່ຝຶກ ແລະຕິດຕາມຊຸກຍູ້ ທີມນັກສົ່ງເສີມໃນລະດັບຖັດໄປເຊັ່ນ: ຄູຝຶກລະດັບສູນກາງ (Master Trainer ຫຼື MT) ຈະເຮັດໜ້າທີ່ຝຶກ_ຕິດຕາມ ຊຸກຍູ້ຄູຝຶກລະດັບແຂວງ ແລະເມືອງ (PT / DT) ຜູ້ທີ່ຈະປະຕິບັດໜ້າທີ່ຝຶກອົບຮົມ ແລະຊຸກຍູ້ສົ່ງເສີມຊາວກະສິກອນໂດຍກົງ. ລະບົບການຝຶກອົບຮົມ_ສົ່ງເສີມແບບນີ້ຈະໃຊ້ເວລາພໍສົມຄວນ ແຕ່ຈະເປັນລະບົບການຝຶກທີ່ມີຄວາມໝັ້ນຄົງໃນຍາວນານ ແລະທັງເປັນການສົ່ງເສີມບົດບາດລະບົບການຈັດຕັ້ງຂອງລັດເປັນຢ່າງດີດ້ວຍ.



໒. ຄວນອອກແຮງໃນທຸກດ້ານເພື່ອໃຫ້ທຸກພາກສ່ວນ ແລະທຸກຄົນກ່ຽວຂ້ອງຮູ້ ແລະເຂົ້າໃຈໃນໜ້າທີ່ລວມອັນສຳຄັນຂອງການປັບປຸງວຽກສົ່ງເສີມ ກປ ໃນຊ່ວງໃກ້ ແລະກາງນີ້ຄື:

- ຈະດ້ວຍວິທີການໃດກໍ່ຕາມ ຕ້ອງເຮັດໃຫ້ບຸກຄະລາກອນທີ່ເຮັດວຽກງານສົ່ງເສີມ ຝຶກອົບຮົມມີທັດສະນະອັນຖືກຕ້ອງ, ກຳໄດ້ເປົ້າໝາຍ ແລະໜ້າທີ່ຕົ້ນຕໍໃນການເຮັດວຽກງານ ການສົ່ງເສີມ ເພື່ອຮັບປະກັນໄດ້ການຈັດຕັ້ງຜັນຂະຫຍາຍແຜນງານ ແລະແນວທາງນະໂຍບາຍໃນວຽກງານການພັດທະນາກະສິກຳ ຂອງຂະແໜງການ ກະສິກຳ ແລະປ່າໄມ້
- ເຮັດໜ້າທີ່ປັບປຸງແບບແຜນວິທີການ ຈັດຕັ້ງປະຕິບັດວຽກງານການສົ່ງເສີມ ຂອງພະນັກງານໃນທຸກລະດັບແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍຖືເອົາວຽກງານການຝຶກອົບຮົມສົມຄູ່ໄປກັບການຊຸກຍູ້ສະໜັບສະໜູນ_ສະໜອງ ແລະການສາທິດປະຕິບັດຕົວຈິງໄປພ້ອມນັ້ນເປັນອັນບຸກເບີກໃຫ້ແກ່ການພັດທະນາການຜະລິດກະສິກຳຕົວຈິງໃນພື້ນຖານການຜະລິດ
- ເພີ່ມຄວາມຮູ້, ຄວາມສາມາດທີ່ເປັນພື້ນຖານໃນວຽກງານການຝຶກອົບຮົມ (ຖ່າຍທອດເຕັກໂນໂລຢີ) ການຕິດຕາມຊຸກຍູ້ ແລະການຈັດຕັ້ງຜັນຂະຫຍາຍບົດຮຽນໃຫ້ແກ່ພະນັກງານກະສິກຳທີ່ກ່ຽວຂ້ອງໃນທຸກລະດັບ_ສ້າງໃຫ້ໄດ້ນັກສົ່ງເສີມຮອບດ້ານ (Generalist)
- ຍູ້ແຮງ ແລະປະສານສົມທົບຢ່າງໃກ້ຊິດກັບການພັດທະນາວິຊາການສະເພາະດ້ານ ເພື່ອເປັນສູນລວມໃນການເຜີຍແຜ່ເຕັກໂນໂລຢີໃໝ່ເຂົ້າສູ່ຂະບວນການຜະລິດຕົວຈິງ
- ປັບປຸງກົນໄກການຄຸ້ມຄອງ ວຽກງານການຝຶກອົບຮົມການສົ່ງເສີມກະສິກຳ ໃນຂະແໜງການ (ແຕ່ສູນກາງ_ແຂວງ_ເມືອງ_ບ້ານ)

- ຊຸກຍູ້ຊາວກະສິກອນໃຫ້ມີການຈັດຕັ້ງໃນການຂະຫຍາຍ ແລະຄຸ້ມຄອງການຜະລິດກະສິກຳຕ່າງໆ (ໃຫ້ມີກຸ່ມຜະລິດ) ທີ່ມີຄວາມເຂັ້ມແຂງ, ສ້າງ ແລະຂະຫຍາຍວິຊາການບ້ານໃນແຕ່ລະດ້ານໃຫ້ກວ້າງຂວາງໃນຈົ່ງຫວະທີໂວ
- ປະສານ_ຊຸກຍູ້_ເອື້ອອຳນວຍໃຫ້ເກີດມີຕະຫຼາດປັດໃຈການຜະລິດ, ຫົວໜ່ວຍ ເກັບຊື້/ປຸງແຕ່ງ ແລະຈຳໜ່າຍຜະລິດຕະພັນ.

## 2.2. <u>ຮູບແບບ/ວິທີການ ປັບປຸງຕົວຈິງ</u>

ກົນໄກການຄຸ້ມຄອງປະສານງານຄວນຈະຖືກປັບປຸງໃຫ້ມີຕາມສະພາວະຄວາມເປັນຈິງໃນໄລຍະໃກ້ ແລະກາງນີ້ແມ່ນເລັ່ງສ້າງໃຫ້ມີ <u>ໜໍ່ແໜງໜ່ວຍຊຸກຍູ້ສົ່ງເສີມ_ຝຶກອົບຮົມ ໃນທຸກລະດັບຂັ້ນການຄຸ້ມຄອງແຕ່ສູນກາງລົງຮອດ ເມືອງໃຫ້ໄດ້ເສັຍກ່ອນ, ເພື່ອກ້າວໄປເຖິງການປັບປຸງທັງໝົດໂຄງປະກອບ ຂອງກອງຂັ້ນແຂວງ ແລະຫ້ອງການ ກປ ເມືອງ ແນໃສ່ໃຫ້ກອງລະດັບແຂວງ ກາຍເປັນຫົວໜ່ວຍການປະສານຄຸ້ມຄອງວຽກງານການສົ່ງເສີມ ໂດຍບໍ່ໃຫ້ໃຫຍ່ໂຕເທົ່າໃດແຕ່ການປະຕິບັດໜ້າທີ່ມີຄຸນນະພາບ, ເຮັດໃຫ້ການຄຸ້ມຄອງ ແລະປະຕິບັດວຽກຊຸກຍູ້ສົ່ງເສີມ_ຝຶກອົບຮົມ ຂອງຫ້ອງການ ກປ ເມືອງ ຄ່ອຍໆເຕີບໂຕຂຶ້ນກອມເອົາເປີເຊັນສູງກວ່າວຽກງານອື່ນໆພາຍໃນໂຄງສ້າງການຄຸ້ມຄອງຂອງຫ້ອງການ ກປ</u>.



ລົງໄດ້ໃນທີ່ສຸດ **(ໝາຍຄວາມວ່າຕ້ອງຝຶກ ໃຫ້ຄົນຮູ້ເຮັດບົດບາດໜ້າທີ່ ແລະຮູ້ເຕັກໂນໂລຢີ_ສາມາດນຳເອົາໄປໃຊ້ຕົວຈິງໂດຍມີການຕິດຕາມຊຸກຍູ້ໃຫ້ຄຳແນະນຳເປັນປະຈຳ_ມີການປະເມີນຜົນ, ຖອດຖອນບົດຮຽນ_ຂະຫຍາຍສິ່ງທີ່ດີສູ່ວົງກວ້າງອອກໄປ).**

ທັງຝຶກທັງພັດທະນາຕົວຈິງໄປພ້ອມໂດຍເລີ່ມຈາກໂຄງການລິເລີ້ມ, ຖອດຖອນບົດຮຽນ ປັບປຸງໃຫ້ດີຂື້ນຈຶ່ງຂະຫຍາຍໄປສູ່ວົງກວ້າງຕໍ່ໄປ (ເຮັດແຕ່ນ້ອຍ ມີບົດຮຽນ ແລະໝັ້ນໃຈແລ້ວຈຶ່ງກ້າວໄປຫາໃຫຍ່)

ພັດທະນາ / ປັບປຸງ ແລະນຳໃຊ້ກົນໄກຂອງລັດທີ່ມີຢູ່ ໃນການພັດທະນາ ແລະຝຶກອົບຮົມ_ສົ່ງເສີມຊາວກະສິກອນ (ເພື່ອຮັບປະກັນໄດ້ຄວາມໝັ້ນຄົງຍາວນານ)

ກ່ອນຈະລິເລີ່ມຈັດຕັ້ງຂະບວນການຝຶກ_ສົ່ງເສີມ, ຕ້ອງໃຫ້ຂໍ້ມູນ ແລະສ້າງຄວາມເຂົ້າໃຈໃຫ້ແກ່ພະນັກງານແຕ່ລະລະດັບກ່ຽວກັບຍຸດທະວິທີ / ເປົ້າໝາຍການຝຶກ, ບົດບາດ_ໜ້າທີຂອງແຕ່ລະຝ່າຍກ່ຽວຂ້ອງ ເພື່ອທີມຄູຝຶກຈະໄດ້ຮັບການຊີ້ນຳ ແລະການສະໜັບສະໜູນຢ່າງເຕັມທີ່ ແລະຕໍ່ເນື່ອງໄດ້ (ສ້າງຄວາມເປັນເຈົ້າການແຕ່ຫົວທີ ເພື່ອໜີຄວາມຫຼົມເຫຼວ ໃນບັ້ນທ້າຍ)

ການຝຶກອົບຮົມພຽງຢ່າງດຽວບໍ່ແມ່ນສິ່ງທີ່ແກ້ໄຂບັນຫາຂອງການພັດທະນາທັງໝົດ, ແຕ່ມັນເປັນການແລກປ່ຽນແນວຄວາມຄິດໃໝ່ໆ, ບົດຮຽນດີໆ ແລະເຕັກໂນໂລຢີເໝາະສົມຕ່າງໆລວມທັງແນວວິທີການແກ້ໄຂບັນຫາ_ວາງແຜນແກ້ໄຂປັບປຸງ, ຫາກບໍ່ມີເງື່ອນໄຂ ຫຼືປັດໃຈອື່ນກະທົບ

# ພາກທີ.3.
# ລະບົບການຝຶກ_ສ້າງທີມນັກສົ່ງເສີມ (Generalist) ເພື່ອພາລະກິດສ້າງ (EVES)

ແນວຄວາມຄິດ ແລະວິທີການ (Concept and Approach) ທີ່ໃຊ້ແມ່ນການພັດທະນາວຽກງານການສົ່ງເສີມ ທີ່ເຫັນວ່າຈະເກີດປະສິດຕິພາບໄດ້ນັ້ນຕ້ອງໄດ້ຖືເອົາວຽກງານການຝຶກອົບຮົມ, ສະໜັບສະໜູນເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານໃນກົມໄກການຈັດຕັ້ງລັດ ແລະປະຊາຊົນທີ່ເປັນກຸ່ມເປົ້າໝາຍຄື: **ພະນັກງານກະສິກໍາ ແລະປ່າໄມ້ ຂັ້ນເມືອງຕ້ອງຮູ້ວິທີການເຮັດວຽກກັບຊາວກະສິກອນດີ,** ກໍາແໜ້ນສະເໜີວ່າ ຮູບແບບຂອງການເຂົ້າໄປສົ່ງເສີມແມ່ນຕ້ອງສ້າງໃຫ້ມີຕາໜ່າງທີ່ເຂັ້ມແຂງໃນພື້ນຖານການຜະລິດ_ກ່າວຄື **ຕ້ອງມີວິຊາການບ້ານແຕ່ລະດ້ານຕາມຄວາມຕ້ອງການຂອງປະຊາຊົນໃນບ້ານທີ່ເປັນເປົ້າໝາຍ, ຕ້ອງມີການຈັດຕັ້ງຂອງປະຊາຊົນໃຫ້ເປັນກຸ່ມການຜະລິດ** ທັງນີ້ເພື່ອໃຫ້ເກີດມີຮູບແບບວິທີການຄຸ້ມຄອງການຜະລິດພາຍໃນຊຸມຊົນ, ເຮັດໄດ້ແນວນັ້ນຈຶ່ງຈະເປັນການສ້າງບາດກ້າວການຂະຫຍາຍຕົວທີ່ດີໃນການຜັນຂະຫຍາຍ ແນວທາງນະໂຍບາຍການເມືອງຂອງພັກທີ່ເນັ້ນໃສ່ການສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເພິ່ງຕົນເອງໄດ້ຂອງພື້ນຖານການຜະລິດ. ສັງຣວມແລ້ວພວກເຮົາຕ້ອງໄດ້ຖືເອົາການຝຶກອົບຮົມເປັນສິ່ງບຸກເບີກໃຫ້ແກ່ການພັດທະນາຕາໜ່າງ ແລະໂຄງສ້າງການຄຸ້ມຄອງວຽກງານການສົ່ງເສີມ ໃນທີ່ສຸດໝາກຜົນໃນການຜະລິດເຊັ່ນ: ສະມັດຕະພາບການປູກພືດ, ຜະລິດຕະພາບການລ້ຽງສັດຈະເກີດຂຶ້ນມາໄດ້ຢ່າງໝັ້ນຄົງ, ທັງຮັບປະກັນການມີຄວາມຄິດລິເລີ່ມ ແລະຫົວຄິດປະດິດສ້າງຂອງພື້ນຖານເອງ, ພາກລັດກໍ່ຈະລົດພາລະແບກຫາບ





**ໂຄງສ້າງລະບົບການຄຸ້ມຄອງປະສານສົມທົບມີສະເໜີ ແນະດັ່ງລຸ່ມນີ້:**



ເພື່ອຢູ້ແຮງ ແລະເພີ່ມຄວາມສັກສິດບົດບາດໜ້າທີ່ຂອງກອງສົ່ງເສີມແຂວງ ແລະຫ້ອງການ ກປ ເມືອງ ແນໃສ່ໃຫ້ບັນລຸໄດ້ເປົ້າໝາຍການປັບປຸງວຽກງານການສົ່ງເສີມ ກປ ນັ້ນ, ໜ່ວຍຊຸກຍູ້ສົ່ງເສີມ_ຝຶກອົບຮົມ (ຫຼືໜ່ວຍຝສ) ຕ້ອງໄດ້ເຮັດບົດບາດໜ້າທີ່ດັ່ງຈະໄດ້ລະບຸລຸ່ມນີ້:

## 2.3. ບົດບາດໜ້າທີ່ ຂອງໜ່ວຍ ຝສ (ລະດັບສູນກາງ)

- ກຳນົດຮູບແບບ / ຍຸດທະວິທີ (ອີງຕາມການຊີ້ນຳຂອງຄະນະຊີ້ນຳ) ໃນວຽກງານການຝຶກ_ສົ່ງເສີມ ກະສິກຳ ແລະປ່າໄມ້
- ພັດທະນາ / ປັບປຸງຫຼັກສູດລະບົບການຝຶກ_ການສົ່ງເສີມທີ່ ເປັນອັນພື້ນຖານສຳລັບວຽກງານ ການສ້າງນັກສົ່ງເສີມ_ຄູຝຶກ ລະດັບຖັດໄປ ແລະໃນເຂດຈຸດສຸມຢ່າງຕໍ່ເນື່ອງ
- ຈັດຝຶກອົບຮົມວິຊາພື້ນຖານດັ່ງກ່າວໃຫ້ແກ່ຄູຝຶກ_ນັກສົ່ງເສີມລະດັບຖັດໄປ, ຊຸກຍູ້ໃຫ້ ແຂວງ ແລະເມືອງ ມີການຝຶກຜູ້ນຳກຸ່ມຜະລິດ ແລະຊາວກະສິກອນຢ່າງມີລະບົບ ແລະສອດຄ່ອງກັບລະດູການຜະລິດ
- ພັດທະນາຂໍ້ແນະນຳ, ວິທີການສ້າງຫຼັດສູດ, ສື່/ອຸປະກອນປະຈັກຕາ ສຳລັບການຝຶກນັກສົ່ງເສີມ, ຜູ້ນຳກຸ່ມຊາວກະສິກອນ, ວິຊາການບ້ານ ແລະຊາວກະສິກອນໂດຍທົ່ວໄປ
- <u>ການສ້າງຖານ ລະບົບ ຂໍ້ມູນການສົ່ງເສີມໃນຂອບເຂດທົ່ວປະເທດ</u>
- ປະສານການຝຶກ / ສົ່ງເສີມ ໂດຍທົ່ວໄປ (ສາຍຕັ້ງ_ຂວາງ) ແລະປະສານແຜນການຝຶກດ້ານວິຊາສະເພາະຈາກກົມ / ກອງ ສູນ_ສະຖານີ, ສະຖາບັນຄົ້ນຄວ້າ, ໂຮງຮຽນ, ໂຄງການຕ່າງໆ, NGOs ແລະຂະແໜງກ່ຽວຂ້ອງເຂົ້າຊ່ວຍຢ່າງມີລະບົບ ແລະທັນສະພາບຄວາມຕ້ອງການ
- ສ້າງລະບົບການຕິດຕາມຊຸກຍູ້ ແລະປະເມີນຜົນຂະບວນການຊຸກຍູ້ສົ່ງ



ກອງທຶນພັດທະນາບ້ານ, ການດູດຊັບ ແລະການຄຸ້ມຄອງແຫຼ່ງທຶນຈາກກອງທຶນເພື່ອຫຼຸດຜ່ອນຄວາມຍາກຈົນ ແລະແຫຼ່ງທຶນຈາກໂຄງການຊ່ວຍເຫຼືອຕ່າງໆ.

ອີກຢ່າງໜຶ່ງ, ລະບົບການສົ່ງເສີມຂັ້ນບ້ານຈະເກີດມີຂຶ້ນໄດ້ຢ່າງດີນັ້ນກໍ່ຕໍ່ເມື່ອພະນັກງານສົ່ງເສີມ ມີຂີດຄວາມສາມາດໃນການປະຕິບັດໜ້າທີ່ໄດ້ດີທັງຄົບຂັ້ນຕອນຂອງລະບົບການພັດທະນາວຽກງານດັ່ງກ່າວ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ພະນັກງານກະສິກຳເມືອງຕ້ອງໄດ້ພັດທະນາຄວາມຮູ້ / ຄວາມສາມາດຂອງຕົນ / ທີມງານໃຫ້ກາຍເປັນນັກສົ່ງເສີມຮອບດ້ານ (ຫຼື generalist ຕາມວິໄສທັດຂອງ MAF).

ເມື່ອໃດທຸກກຸ່ມ/ວິຊາການບ້ານໄດ້ຜ່ານຂະບວນການຮຽນຮູ້ໝົດແລ້ວ ການປະຕິບັດພາລະກິດການສົ່ງເສີມຂອງພະນັກງານເມືອງແມ່ນຕິດພັນກັບວິຊາການບ້ານເລົ່ານັ້ນເພື່ອ:

- ໃຫ້ການຝຶກເຕັກນິກສະເພາະດ້ານ ແລະຂໍ້ມູນຂ່າວສານອັນໃໝ່ໆທີ່ວິຊາການບ້ານບໍ່ທັນຮູ້ ຫຼືບໍ່ມີ
- ສ້າງຕາໜ່າງປະສານ (network) ລະຫວ່າງວິຊາການບ້ານດ້ວຍກັນ ຫຼືລະຫວ່າງຄອບຄົວທີ່ຜະລິດເດັ່ນ
- ຈັດຕັ້ງ ແລະເອື້ອອຳນວຍການແລກປ່ຽນບົດຮຽນລະຫວ່າງບ້ານຕໍ່ບ້ານ, ຜູ້ຜະລິດດີເດັ່ນກັບວິຊາການບ້ານສະເພາະດ້ານ

ທັງນີ້ກໍ່ເພື່ອຍູ້ດັນໃຫ້ຂະບວນການຮຽນຮູ້ ຫຼືລະບົບການກະຈາຍເຕັກໂນໂລຢີຂະຫຍາຍໄວຂຶ້ນ.

ຢ່າງໃດກໍ່ດີສິ່ງທີ່ຄວນເອົາໃຈໃສ່ໃນການສ້າງລະບົບການສົ່ງເສີມຂັ້ນບ້ານນີ້ ແມ່ນການສັນຫາ ແລະຄຸ້ມຄອງດ້ານການເງິນ ອັນເປັນປັດໃຈຕັດສິນຢ່າງໜຶ່ງທີ່ສຳຄັນ ທັງນີ້ກໍ່ເພາະແຕ່ລະຂົງເຂດ, ເມືອງ, ຕະຫຼອດຮອດບ້ານ ມີຄວາມແຕກຕ່າງແລະມີຈຸດພິເສດດ້ານຮີດຄອງປະເພນີສະພາບເສດຖະກິດ_ສັງຄົມໂດຍລວມ. ສະນັ້ນ, ການຊອກຫາຮູບແບບວິທີການໃນວຽກດັ່ງກ່າວ ຈຶ່ງມີຄວາມຈຳເປັນບໍ່ນ້ອຍເພື່ອເຫັນໄດ້ຂີດຄວາມສາມາດຂອງທ້ອງຖິ່ນ, ພູມປັນຍາແນໃສ່ເພື່ອກຳນົດໃຫ້ໄດ້ວ່າອຳນາດການປົກຄອງ, ກຸ່ມ ແລະວິຊາການບ້ານຕ້ອງໄດ້ຮັບການຝຶກອົບຮົມ, ຊີ້ນຳໃນເລື້ອງດັ່ງກ່າວຕື່ມເພື່ອໃຫ້ມີຂີດຄວາມສາມາດໃນການສັນຫາ ແລະຄຸ້ມຄອງວຽກງານການເງິນເຂົ້າໃນວຽກງານການສ້າງລະບົບສົ່ງເສີມຂັ້ນບ້ານຂອງເຂົາເຈົ້າໃຫ້ເຂັ້ມແຂງໄດ້, ໂດຍສະເພາະການຄຸ້ມຄອງນຳໃຊ້



ເສີມ_ຝຶກທີມນັກຝຶກ_ນັກສົ່ງເສີມ ແລະຊາວກະສິກອນເປົ້າໝາຍໃຫ້ສອດຄ່ອງ (ແຕ່ສູນກາງ, ແຂວງ, ເມືອງ, ບ້ານ / ຄອບຄົວ)

- ນຳພາຈັດຕັ້ງປະຕິບັດໃນຂັ້ນແຂວງ, ເມືອງ, ບ້ານ, ກຸ່ມ ແລະຄອບຄົວຈົນຂັ້ນຕ່າງໆສາມາດດຳເນີນງານດ້ວຍຕົນເອງໄດ້ດ້ານການເຜີຍແຜ່ບົດຮຽນ ແລະຖ່າຍທອດບັນດາເຕັກນິກ ວິທະຍາການທີ່ອົງການຈັດຕັ້ງອື່ນໆ ໄດ້ຄົ້ນຄວ້າ/ນຳໃຊ້ມີຜົນສຳເລັດມາແລ້ວ ເພື່ອຮັບປະກັນໃຫ້ວຽກສົ່ງເສີມ ໄດ້ທະລຸໂລ່ງລົງຮອດຮາກຖານການຜະລິດ_ບ້ານ ແລະກຸ່ມ / ຄອບຄົວຊາວກະສິກອນ
- ເປັນເສນາທິການຢ່າງເປັນທາງການໃຫ້ແກ່ອົງກອນ ແລະຄະນະຊີ້ນຳຂອງລະດັບຕົນສັງກັດ.

## 2.4. ບົດບາດໜ້າທີ່ ຂອງໜ່ວຍ ຝສ ແຂວງ

- ກຳນົດຍຸດທະສາດ/ວິທີການ (ອີງຕາມການຊີ້ນຳຂອງຄະນະຊີ້ນຳ) ໃນວຽກງານການຝຶກ_ສົ່ງເສີມກະສິກຳ ແລະປ່າໄມ້ເຂົ້າໃນແຕ່ລະເຂດ, ແຕ່ລະເມືອງ ພາຍໃນແຂວງ ເພື່ອໃຫ້ໄປຕາມ ແລະຮັບໃຊ້ແຜນພັດທະນາລວມຂອງ ແຂວງ/ເມືອງ
- ຂັດຈ້ອນ / ນຳໃຊ້ຫຼັກສູດລະບົບການຝຶກ_ການສົ່ງເສີມທີ່ເປັນອັນພື້ນຖານສຳລັບວຽກງານການສ້າງ/ບຳລຸງ ທີມນັກສົ່ງເສີມ _ ຄູຝຶກ ເມືອງພາຍໃນແຂວງຢ່າງຕໍ່ເນື່ອງ
- ພັນຂະຫຍາຍ, ຈັດຝຶກອົບຮົມຮູບແບບວິທີການພື້ນຖານການສົ່ງເສີມໃຫ້ແກ່ຄູຝຶກ_ນັກສົ່ງເສີມລະດັບຖັດໄປ, ຊຸກຍູ້ໃຫ້ເມືອງມີການຝຶກ ແລະສ້າງຜູ້ນຳກຸ່ມການຜະລິດ ແລະຊາວກະສິກອນຢ່າງມີລະບົບ ແລະສອດຄ່ອງກັບລະດູການຜະລິດ

- ດັດສົມ ແລະພັດທະນາຂໍ້ແນະນຳ, ສື່/ອຸປະກອນປະຈັກຕາ ສຳລັບເປົ້າໝາຍການຊຸກຍູ້ຜູ້ນຳກຸ່ມຊາວກະສິກອນ, ວິຊາການບ້ານ ແລະຊາວກະສິກອນໂດຍທົ່ວໄປຕາມສະພາວະຄວາມເປັນຈິງ ຂອງແຂວງ **<u>ຣວມທັງການສ້າງລະບົບຂໍ້ມູນ ການສົ່ງເສີມ ພາຍໃນແຂວງ ໃຫ້ມີຄວາມຫຼາກຫຼາຍ</u>**
- ປະສານການຝຶກ/ສົ່ງເສີມ ໂດຍທົ່ວໄປ ແລະປະສານແຜນການຝຶກດ້ານວິຊາການສະເພາະດ້ານຈາກກອງ, ສູນ_ສະຖານີຄົ້ນຄ້ວາ, ໂຮງຮຽນ, ໂຄງການຕ່າງໆ, NGOs ແລະຂະແໜງກ່ຽວຂ້ອງພາຍໃນແຂວງ ເຂົ້າຊ່ວຍຢ່າງມີລະບົບ ແລະທັນສະພາບຄວາມຕ້ອງການ
- ຕິດຕາມຊຸກຍູ້ ແລະປະເມີນຜົນຂະບວນການຊຸກຍູ້ສົ່ງເສີມ ຂອງນັກສົ່ງເສີມຂັ້ນເມືອງ ແລະຊາວກະສິກອນໃນສ່ວນລະດັບຕົນຮັບຜິດຊອບແບບມີສ່ວນຮ່ວມຂອງທຸກຝ່າຍກ່ຽວຂ້ອງ
- ນຳພາຈັດຕັ້ງປະຕິບັດໃນຂັ້ນເມືອງຈົນໃຫ້ສາມາດດຳເນີນງານດ້ວຍຕົນເອງໄດ້
- ເປັນເສນາທິການໃຫ້ແກ່ກອງ ແລະຄະນະຊີ້ນຳຂອງລະດັບຕົນສັງກັດ ແລະຮັບຜິດຊອບ

## <u>2.5. ບົດບາດໜ້າທີ່ ຂອງໜ່ວຍ ຝສ ເມືອງ</u>

- ສຶກສາສະພາບການຜະລິດ, ບັນຫາ ແລະທ່າແຮງຕ່າງໆໃນໝູ່ບ້ານທີ່ເປັນເປົ້າໝາຍ ການສົ່ງເສີມຂອງເມືອງ
- ວິເຄາະ / ວິໄຈຄວາມຕ້ອງການຕ່າງໆ, ຣວມທັງ TNA ຂອງຊາວກະສິກອນໃນເຂດ/ບ້ານເປົ້າໝາຍໃຫ້ການສົ່ງເສີມ ແລະກິດຈະກຳທີ່ຕ້ອງສົ່ງເສີມແບບຮອບດ້ານ



ທານ, ການປູກປ່າກ້າເບ້ຍ, ການປຸງແຕ່ງ,ຖະໜອມອາຫານ ແລະການຕະຫຼາດຊົນນະບົດ...) ການເຄື່ອນໄຫວທີ່ເປັນທາງການຂອງວິຊາການບ້ານແມ່ນຂຶ້ນກັບຄວາມຕ້ອງການຂອງບ້ານນັ້ນໆ.

3. ເມື່ອປະເມີນຜົນການປະຕິບັດຂອງກຸ່ມຮຽນຮູ້ແລ້ວ ເກີດມີຄອບຄົວພາຍໃນບ້ານສົນໃຈເຂົ້າຮ່ວມຂະບວນການ, ໜ້າທີ່ກະຈ່າຍຄວາມຮູ້ຕໍ່ໃຫ້ຄອບຄົວເຫຼົ່ານັ້ນຕ້ອງແມ່ນໜ້າທີ່ຂອງວິຊາການປະຈຳບ້ານພາຍໃຕ້ແຜນການ, ການເຫັນພ້ອມ ແລະສະໜັບສະໜູນຂອງອຳນາດການປົກຄອງບ້ານ
4. ພະນັກງານສົ່ງເສີມໃນຊ່ວງໄລຍະນີ້ ແມ່ນເຮັດໜ້າທີ່ໃຫ້ຄວາມຮູ້ທີ່ເປັນອັນໃໝ່ໃນກິດຈະກຳກຸ່ມເທົ່ານັ້ນ ຫຼືສະໜອງຂໍ້ມູນເພື່ອເສີມສ້າງຂີດຄວາມສາມາດດ້ານການຈັດການບໍລິຫານກຸ່ມ, ການປະຕິບັດໜ້າທີ່ຂອງວິຊາການບ້ານຢ່າງເຈາະຈົງສະເພາະດ້ານ
5. ອຳນາດການປົກຄອງບ້ານຕ້ອງຖືກິດຈະກຳການສ້າງເສນາທິການດ້ານການຜະລິດກະສິກຳຄື ມີກຸ່ມຜະລິດ, ມີວິຊາການບ້ານ ແລະການຂະຫຍາຍບົດຮຽນເພື່ອເພີ່ມຂີດຄວາມສາມາດ ໃນການຜະລິດໃຫ້ແກ່ລູກບ້ານເປັນພາລະກິດ ແລະພັນທະຢ່າງໜຶ່ງຂອງຕົນ
6. ການຄຸ້ມຄອງ ແລະນຳໃຊ້ຊັບພະຍາກອນຕ່າງໆເພື່ອການຮັກສາ, ເຄື່ອນໄຫວ ແລະພັດທະນາຕາໜ່າງການສົ່ງເສີມຂັ້ນບ້ານໃຫ້ຍືນຍົງແມ່ນເປັນໜ້າທີ່_ຄວາມຮັບຜິດຊອບຂອງອຳນາດການປົກຄອງບ້ານ / ເມືອງທີ່ຕ້ອງສັນຫາ, ຈັດຕັ້ງ ແລະຂະຫຍາຍເອົາເອງ. ບົດບາດທີ່ສຳຄັນທີ່ສຸດກໍ່ຄືກອງທຶນພັດທະນາບ້ານນັ້ນເອງ ຫຼືກອງທຶນຂອງກຸ່ມຜະລິດເຫຼົ່ານັ້ນ.

## 2.7.3. ຫຼັກການລວມໃນການສ້າງລະບົບການສົ່ງເສີມຂັ້ນບ້ານ

1. ນັກສົ່ງເສີມ (ພ/ງເມືອງ ຫຼືໂຄງການໃດໆກໍ່ຕາມ) ເມື່ອມີບ້ານ ຫຼືເຂດເປົ້າໝາຍການສົ່ງເສີມ ຂອງອົງການຈັດຕັ້ງຕົນຕ້ອງເປັນຜູ້ເຂົ້າໄປຊຸກຍູ້ໃຫ້ເກີດມີການຈັດຕັ້ງກຸ່ມຜະລິດຈາກຄອບຄົວສະມັກໃຈທີ່ຢາກຮຽນຮູ້ໃນເລື້ອງໃດນຶ່ງ ແລ້ວສ້າງຂະບວນການຮຽນຮູ້ໃນເລື້ອງດັ່ງກ່າວ (create learning process) ໃຫ້ຄົບວົງຈອນຕະລອດຮອບ ຫຼືລະດູການຜະລິດໜຶ່ງ. ຂະບວນການຮຽນຮູ້ນີ້ຕ້ອງເລີ່ມຈາກການສຶກສາບັນຫາ ແລະ ຄວາມຕ້ອງການທີ່ແທ້ຈິງຂອງກຸ່ມຄອບຄົວເປົ້າໝາຍນັ້ນ, ກໍານົດສິ່ງຕ້ອງຝຶກໃຫ້ຄວາມຮູ້ / ຄວາມສາມາດ_ທັກສະໃຫ້ແກ່ຄອບຄົວເປົ້າໝາຍ, ຕໍ່ດ້ວຍຈັດຕັ້ງການຝຶກຕາມດ້ວຍການຕິດຕາມຊຸກຍູ້ເປັນປະຈໍາຕະຫຼອດຊ່ວງການນໍາໃຊ້ບົດຮຽນທີ່ສົ່ງໃຫ້ເພື່ອໃຫ້ຊາວກະສິກອນເກີດຄວາມໝັ້ນໃຈໃນການນໍາໃຊ້ເຕັກນິກຕ່າງໆແຕ່ລະຂັ້ນຕອນ ໂດຍມີການບັນທຶກລາຍງານໃຫ້ທຸກຝ່າຍຮັບຮູ້ເຖິງຄວາມຄືບໜ້າ ແລະຂໍ້ຄົງຄ້າງເປັນໄລຍະໆ. ໃນຊ່ວງທ້າຍຕ້ອງມີການປະເມີນຜົນ / ສະຫຼຸບ ຖອດຖອນບົດຮຽນ. ເພື່ອວາງແຜນປະຕິບັດແກ້ໄຂສິ່ງທີ່ຍັງຄ້າງຄາຮ່ວມກັບຊາວບ້ານເຫຼົ່ານັ້ນ. ກ້າວເຂົ້າສູ່ຮອບ ຫຼືລະດູການຜະລິດທີສອງ ພ/ງສົ່ງເສີມຕ້ອງເນັ້ນການຈັດການບໍລິຫານກຸ່ມ ແລະການປະຕິບັດບົດບາດໜ້າທີ່ຂອງຄະນະກຸ່ມ, ວິຊາການບ້ານ. ນອກນັ້ນກໍ່ໃຫ້ຄວາມຮູ້ດ້ານເຕັກນິກທີ່ເຫັນວ່າຈໍາເປັນແກ່ກຸ່ມເພີ່ມເຕີມ
2. ຊຸກຍູ້ໃຫ້ກຸ່ມ ແລະບ້ານຈັດຕັ້ງຄອບຄົວສະມາຊິກກຸ່ມຮຽນຮູ້ທີ່ພົ້ນເດັ່ນໃຫ້ກາຍເປັນວິຊາການບ້ານເປັນທາງການ ເພື່ອເຮັດໜ້າທີ່ສືບຕໍ່ກະຈາຍຄວາມຮູ້, ປະສານສົມທົບກັບອົງການຈັດຕັ້ງອື່ນໆ, ໃນບ້ານໜຶ່ງອາດມີຫຼາຍກຸ່ມຮຽນຮູ້ ແລະຫຼາຍວິຊາການບ້ານ (ລ້ຽງສັດ, ປູກຝັງ, ຊົນລະປະ



- ກໍານົດແຜນການ/ວິທີການ (ອີງຕາມຍຸດທະສາດເມືອງ ແລະການຊີ້ນໍາຂອງຄະນະຊີ້ນໍາ) ໃນວຽກງານການຝຶກ_ສົ່ງເສີມຊາວກະສິກອນສໍາລັບບ້ານ, ກຸ່ມບ້ານ ຫຼືເຂດຮັບຜິດຊອບຂອງຕົນ
- ດັດສົມ/ປັບປຸງຫຼັກສູດ, ສ້າງສື່/ອຸປະກອນການຝຶກອົບຮົມຊາວກະສິກອນ ຕາມຄວາມຕ້ອງການ ເພື່ອຊ່ວຍໃຫ້ຊາວບ້ານແກ້ໄຂບັນຫາທີ່ມີໃນການຜະລິດກະສິກໍາຂອງເຂົາເຈົ້າໃຫ້ຫຼຸດລົງເປັນກ້າວໆ
- ຂົນຂວາຍ/ຊຸກຍູ້ ຊາວກະສິກອນໃຫ້ມີການຈັດຕັ້ງເປັນກຸ່ມຜູ້ຜະລິດ ເພື່ອຮ່ວມກັນຄຸ້ມຄອງກິດຈະກໍາການຜະລິດ, ໂຄງລ່າງພື້ນຖານກະສິກໍາທີ່ມີໃນບ້ານໃຫ້ເກີດປະສິດຕິຜົນສູງ, ຍູ້ແຮງການເພີ່ມປະສິດຕິຜົນການຜະລິດ ຂອງຄອບຄົວເປັນຈຸດໃຈກາງຂອງວຽກງານຊຸກຍູ້ສົ່ງເສີມ
- ຈັດຝຶກອົບຮົມຮູບແບບວິທີການຄຸ້ມຄອງບໍລິຫານກຸ່ມ, ຮວມທັງເຕັກນິກ_ວິຊາການດ້ານການຜະລິດຕ່າງໆ ໃຫ້ແກ່ຜູ້ນໍາກຸ່ມ ແລະສາມະຊິກ (ຊາວກະສິກອນ) ຢ່າງມີລະບົບ ແລະສອດຄ່ອງກັບລະດູການຜະລິດ, ຮັບປະກັນຍູ້ແຮງສ້າງໃຫ້ມີວິຊາການບ້ານໃນດ້ານຕ່າງໆຂອງກຸ່ມຂອງບ້ານ
- ສັນຫາຂໍ້ແນະນໍາ, ສື່/ອຸປະກອນປະຈັກຕາ ສໍາລັບການຝຶກຮວມທັງການຊຸກຍູ້ຜູ້ນໍາກຸ່ມຊາວກະສິກອນ, ວິຊາການບ້ານ ແລະຊາວກະສິກອນໂດຍທົ່ວໄປ
- ຈັດຕັ້ງ/ນໍາພາຊາວກະສິກອນເປົ້າໝາຍເພື່ອດໍາເນີນການສາທິດ, ການແລກປ່ຽນບົດຮຽນ ແລະການພັດທະນາເຕັກໂນໂລຍີການຜະລິດໃໝ່ໆພ້ອມທັງເປັນເຈົ້າການນໍາພາຈັດຕັ້ງປະຕິບັດນັບແຕ່ຂອດການຜະລິດ, ການປຸງແຕ່ງ, ຫາຊ່ອງທາງຊ່ວຍຂັ້ນບ້ານໃຫ້ໄດ້ມີບໍລິການຂາເຂົ້າ ແລະແຫຼ່ງທຶນການຜະລິດຮວມທັງການຕະຫຼາດໃຫ້ຄົບວົງຈອນ ເພື່ອ

ຮັບປະກັນໃຫ້ສິ່ງທີ່ຕົນໄດ້ສົ່ງເສີມຖືກປະຕິບັດຢ່າງມີຜົນສຳເລັດ

- ຮວບຮວມບັນດາຕົວເລກ / ສະຖິຕິການຜະລິດຂອງບ້ານພ້ອມທັງສ້າງ ເປັນລະບົບຖານຂໍ້ມູນການສົ່ງເສີມ ປະຈຳຫ້ອງການກະສິກຳເມືອງ
- ປະສານສົມທົບກັບແຂວງ, ອົງການຈັດຕັ້ງອື່ນໆ ແລະຂະແໜງວິຊາສະ ເພາະຕ່າງໆພາຍໃນເມືອງ ເພື່ອເຂົ້າຊ່ວຍຊາວກະສິກອນ ແກ້ໄຂບັນຫາ ຢ່າງມີລະບົບ ແລະທັນກັບສະພາບຄວາມຕ້ອງການໃນກິດຈະກຳການ ຜະລິດກະສິກຳຂອງຊາວກະສິກອນ
- ຕິດຕາມຊຸກຍູ້, ປະເມີນຜົນ ແລະຂະຫຍາຍຜົນຂະບວນການຝຶກ_ສົ່ງ ເສີມຊາວກະສິກອນ ໃນສ່ວນລະດັບຕົນຮັບຜິດຊອບຢ່າງຕໍ່ເນື່ອງ ແລະ ມີສ່ວນຮ່ວມຂອງທຸກຝ່າຍກ່ຽວຂ້ອງ
- ເປັນເສນາທິການໃຫ້ແກ່ອົງກອນ ແລະຄະນະຊີ້ນຳຂອງລະດັບຕົນສັງ ກັດ

ຈາກການດຳເນີນງານຕົວຈິງໄລຍະໜຶ່ງ ແລະເມື່ອມີໝາກຜົນ ການເຄື່ອນໄຫວຂອງໜ່ວຍ (ຝສ) ແລະທີມບຸກຄະລາກອນເກີດມີຄວາມ ເຂັ້ມແຂງແລ້ວ ໂຄງປະກອບການຄຸ້ມຄອງທັງໝົດວຽກສົ່ງເສີມ ແຕ່ສູນ ກາງ ຮອດເມືອງ ຈຶ່ງຈະສາມາດດັດປັບໄປໃນຮູບແບບທີ່ສາມາດເຄື່ອນ ໄຫວ_ປະສານສົມທົບ ແລະຄຸ້ມຄອງທີ່ຄ່ອງຕົວໄດ້ດັ່ງໃນຂໍ້ສະເໜີລຸ່ມນີ້:



**ຮູບສະແດງ**

**ອົງປະກອບຂອງລະບົບສົ່ງເສີມຂັ້ນບ້ານ (EVES) ທີ່ເຂັ້ມແຂງ_ຍືນຍົງ**



ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ພວກເຮົາຕ້ອງໄດ້ສ້າງກອບຫຼັກການລວມ ເພື່ອແຕ່ລະເມືອງ/ເຂດສາມາດປັບໃຊ້ໃຫ້ໄດ້ ໂດຍມີທ່າອະທຍາຍຕົວຂຶ້ນໄປຕາມຄວາມຕ້ອງການຂອງຊາວກະສິກອນເປົ້າໝາຍ.

## 2.7.2. ອົງປະກອບສຳຄັນຂອງລະບົບສົ່ງເສີມຂັ້ນບ້ານ

1. ຕາໜ່າງການສົ່ງເສີມລະດັບບ້ານ: ປະກອບດ້ວຍ

- ວິຊາການບ້ານ ທີ່ພົ້ນເດັ່ນ
- ກຸ່ມຜູ້ຜະລິດ ທີ່ເຂັ້ມແຂງ
- ກອງທຶນ
- ການຜະລິດທີ່ມີປະສິດທິຜົນ

2. ການສະໜັບສະໜູນໃນລະດັບບ້ານ:

- ອຳນາດການປົກຄອງບ້ານ,ໂດຍປະສານສາຍຕັ້ງຈາກພາຍນອກ
- ພະນັກງານສົ່ງເສີມເມືອງ/ໂຄງການ. . .

3. ກອງທຶນ: ອາດເປັນກອງທຶນຂອງກຸ່ມການຜະລິດເອງ ຫຼືກອງທຶນພັດທະນາຂອງບ້ານເພື່ອຕອບສະໜອງ ແລະເປັນແຮງຈູງໃຈໃນການປະຕິບັດໜ້າທີ່ກະຈ່າຍຄວາມຮູ້, ຄວາມສາມາດ, ປະສົບການຂອງວິຊາການບ້ານໄປສູ່ຄອບຄົວ ຫຼືກຸ່ມຜະລິດໃໝ່. ທັງນັ້ນ ທັງນີ້ ກໍ່ຂຶ້ນກັບການຕັດສິນໃຈຕົກລົງຂອງກຸ່ມ ແລະອຳນາດການປົກຄອງເອງ.



ສ່ວນໃນລະດັບແຂວງ ແລະເມືອງຄວນໃຫ້ມີໂຄງສ້າງການຈັດຕັ້ງວຽກ ສົ່ງເສີມທີ່ກົມກຽວກັນ, ທັງຮັບປະກັນໄດ້ການປະສານສົມທົບກັບວຽກຂະແໜງການອື່ນ ແລະວຽກກົມມະຫາພາກອີກດ້ວຍ:

**ກອງສົ່ງເສີມ ກປ ແຂວງ**

**ໜ່ວຍປະສານງານການ ສົ່ງເສີມ_ຝຶກອົບຮົມ**

- ດ້ານການປູກຝັງ
- ດ້ານການລ້ຽງສັດ
- ດ້ານການ ຊຸປທ
- ດ້ານການປ່າໄມ້
- ດ້ານ ຄກ ສະເພາະ

**ໜ່ວຍບໍລິຫານ / ແຜນການ**

- ວຽກງານການຈັດຕັ້ງ
- ວຽກງານບໍລິຫານ
- ການຄຸ້ມຄອງລະບຽບການ
- ວຽງງານແຜນການ
- ວຽກການເງິນ
- ວຽກການບັນຊີ

**ກອງສົ່ງເສີມ ກປ ເມືອງ**

**ໜ່ວຍປະສານງານການ ສົ່ງເສີມ_ຝຶກອົບຮົມ**

- ດ້ານການປູກຝັງ
- ດ້ານການລ້ຽງສັດ
- ດ້ານການ ຊຸປທ
- ດ້ານການປ່າໄມ້
- ດ້ານ ຄກ ສະເພາະ / ປະສານງານ
- ວຽກຂໍ້ມູນສະຖິຕິ

**ໜ່ວຍບໍລິຫານ / ແຜນການ**

- ວຽກງານການຈັດຕັ້ງ
- ວຽກງານບໍລິຫານ
- ການຄຸ້ມຄອງລະບຽບການ
- ວຽງງານແຜນການ
- ວຽກການເງິນ
- ວຽກການບັນຊີ



## 2.7. ລະບົບການສົ່ງເສີມຂັ້ນບ້ານ (VES)

ນະໂຍບາຍໃນການພັດທະນາເສດຖະກິດສັງຄົມຂອງພັກ ແລະລັດຖະບານໄດ້ກຳນົດອອກຢ່າງຈະແຈ້ງແລ້ວວ່າ ໃຫ້ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດທຸກກິດຈະກຳການພັດທະນາຂອງບ້ານ. ດັ່ງນັ້ນ, ການສ້າງໃຫ້ບ້ານມີຕາໜ່າງການສົ່ງເສີມທີ່ສາມາດເຄື່ອນໄຫວເອົາເອງໄດ້ນັ້ນຈຶ່ງເປັນຄວາມຈຳເປັນພາວະວິໄສ ໃນວຽກງານການ ສົ່ງເສີມກະສິກຳ ແລະປ່າໄມ້ພວກເຮົາ.

### 2.7.1. ລະບົບສົ່ງເສີມຂັ້ນບ້ານແມ່ນຫຍັງ ?

ແມ່ນຮູບແບບການຈັດຕັ້ງວຽກ ການສົ່ງເສີມກະສິກຳ ຢ່າງໜຶ່ງທີ່ສາມາດເຄື່ອນໄຫວໄດ້ພາຍໃຕ້ການເປັນເຈົ້າການ ໃນການຄຸ້ມຄອງຂອງອຳນາດການປົກຄອງຂັ້ນບ້ານເປັນພື້ນຖານ.

ສະພາບທາງກາຍະພາບ ແລະເສດຖະກິດສັງຄົມຂອງແຕ່ລະເຂດ, ບ້ານພາຍໃນເມືອງໜຶ່ງໃນຂອບເຂດທົ່ວປະເທດແມ່ນອນຕ້ອງມີອັນແຕກຕ່າງກັນ, ດັ່ງນັ້ນ, ການໃຫ້ບໍລິການ ແລະວິທີການຕ່າງໆທີ່ເຂົ້າໄປປະຕິບັດຍ່ອມຕ້ອງມີຄວາມແຕກຕ່າງກັນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຊາວກະສິກອນທີ່ຕ້ອງການການບໍລິການທາງວິຊາການ (ເຊັ່ນ: ປະເພດການບໍລິການ, ວິທີການ ແລະລະດັບການໃຫ້ບໍລິການຮ່ວມທັງເຕັກນິກ / ເຕັກໂນໂລຢີ ແລະປັດໃຈຕ່າງໆ).




ການຈັດຕັ້ງຕົວຈິງ

ອາດເລີ້ມຈາກການສ້າງໃຫ້ມີໜ່ວຍບໍລິການສົ່ງເສີມເຂດໃດໜຶ່ງກ່ອນ



ທັງໝົດການເຄື່ອນໄຫວຂອງບັນດາທີມງານສົ່ງເສີມຝຶກອົບຮົມບົນພື້ນຖານບົດບາດໜ້າທີ່ງໄດ້ກ່າວຂ້າງເທິງນັ້ນແມ່ນ ເພື່ອໃຫ້ເກີດມີລະບົບການປະສານສົມທົບ ໃນວຽກງານສົ່ງເສີມ ກັບຂະແໜງການມະຫາພາກ ແລະຂະແໜງການປິ່ນອ້ອມໃຫ້ມີຄວາມຄ່ອງຕົວ. ຈາກຜົນການເຄື່ອນໄຫວດັ່ງກ່າວນັ້ນສິ່ງຈະໄດ້ຮັບຈາກການປັບປຸງລະບົບການຄຸ້ມຄອງວຽກງານການຊຸກຍູ້ _ ສົ່ງເສີມໃນການຜັນຂະຫຍາຍທິດທາງນະໂຍບາຍກໍ່ຄື:

- ນະໂຍບາຍໃນການຊຸກຍູ້_ສົ່ງເສີມ ຊາວກະສິກອນ ແລະພະນັກງານລັດຈະເປັນໄປ ໃນທິດທາງອັນດຽວກັນໄດ້ສະດວກກວ່າເພາະມີສູນລວມຢູ່ສ່ວນກາງຢູ່ແລ້ວ
- ຊັບພະຍາກອນທີ່ມີຈຳກັດຈະສາມາດປະສານໃຫ້ເກີດການນຳໃຊ້ ຢ່າງມີປະສິດທິຜົນສູງຂຶ້ນໄດ້
- ການພັດທະນາລະບົບໃນກົນໄກລັດໃຫ້ສາມາດເຄື່ອນໄຫວບໍລິການເຕັກນິກວິຊາການໃຫ້ແກ່ຊາວກະສິກອນເກີດຂຶ້ນໄດ້ຢ່າງມີປະສິດຕິພາບ ແລະຕໍ່ເນື່ອງ ແລະເປັນວິທີດຽວທີ່ຈະເຮັດໃຫ້ການພັດທະນາມີຄວາມໝັ້ນຄົງ ຍາວນານໄດ້ເປັນຢ່າງດີ.

ນະໂຍບາຍທີ່ດີ ຫາກບໍ່ມີການຈັດຕັ້ງທີ່ເຂັ້ມແຂງຮອງຮັບ ແລະບໍ່ມີຂະບວນການທີ່ເໝາະສົມກໍ່ຄົງເຮັດໃຫ້ການພັດທະນາວຽກງານສົ່ງເສີມກະສິກຳ ນອນສະຫງົບນິ້ງຢູ່ໃນແຕ່ທາງທິດສະດີເທົ່ານັ້ນ.

## 2.6. ຮູບແບບ/ກົນໄກການປະຕິບັດວຽກສົ່ງເສີມແຕ່ເມືອງລົງຫາບ້ານ

ການຈັດຕັ້ງກົນໄກຄຸ້ມຄອງ ແລະເຄື່ອນໄຫວວຽກການສ້າງລະບົບສົ່ງເສີມຂັ້ນບ້ານ (VES), ໂດຍສະເພາະໃນທາງປະຕິບັດຕົວຈິງຂອງຫ້ອງການ ກປ ເມືອງຕ້ອງໃຫ້ກ່ຽວຂ້ອງກັບການແບ່ງຄວາມຮັບຜິດຊອບ ແລະຂອບເຂດສິດໜ້າທີ່ (ເພາະແຕ່ລະເມືອງມີລັກສະນະສະເພາະບໍ່ວ່າດ້ານຈຳນວນພົນ ແລະຂີດຄວາມສາມາດພະນັກງານ). ນອກນັ້ນໃນເຂດພູດອຍໄລຍະຫ່າງລະຫວ່າງບ້ານຕໍ່ບ້ານກໍ່ເປັນອຸປະສັກບໍ່ນ້ອຍ. ດັ່ງນັ້ນ, ເພື່ອໃຫ້ການປະຕິບັດມີປະສິດຕິຜົນ, ທັນສະພາບການຂອງວຽກສົ່ງເສີມ, ຫຼຸດຄ່າຊື້ນເປືອງໃນການເດີນທາງໄປກັບຂອງນັກສົ່ງເສີມແຕ່ລະວັນການຈັດຕັ້ງໃຫ້ມີຫ້ອງການສົ່ງເສີມປະຈຳເຂດ ໃນຂອບເຂດຄວາມຮັບຜິດຊອບ ຂອງແຕ່ລະຫ້ອງການ ກປ ເມືອງ ເປັນສິ່ງທີ່ຕ້ອງໄດ້ຄົ້ນຄິດພິຈາລະນາທັງໃນຮູບການຈັດຕັ້ງ ແລະວິທີເຄື່ອນໄຫວຕົວຈິງ ຕະຫຼອດຮອດຮ່ວງງົບປະມານສຳລັບວຽກດັ່ງກ່າວອີກດ້ວຍ. ຖ້າມີການຈັດຕັ້ງຂຶ້ນໄດ້ເຊື່ອວ່າການເກັບກຳສະພາບການຜະລິດ, ການໃຫ້ບໍລິການຊ່ວຍແກ້ບັນຫາຂອງຊາວກະສິກອນຈະທ່ວງທັນເວລາ ທັງເປັນການສ້າງຄວາມໃກ້ຊິດລະຫວ່າງນັກສົ່ງເສີມກັບຊາວກະສິກອນອີກດ້ວຍ. ໃນຍາວນານເຂດໃດທີ່ເຫັນວ່າວິຊາການບ້ານ ເກີດມີຄວາມເຂັ້ມແຂງກໍ່ສາມາດນຳເອົາເຂົາເຈົ້າເຂົ້າມາມີບົດບາດໃນຖານະເປັນຕົວແທນຂອງຊຸມຊົນ ໃນການໃຫ້ບໍລິການວິຊາການແກ່ເຂດອື່ນ. ນີ້ຄືການສ້າງຄວາມເປັນເຈົ້າການສ້າງຄວາມເຂັ້ມແຂງ ດ້ວຍຕົນເອງຂອງທ້ອງຖິ່ນໃນດ້ານນີ້. ໝາຍວ່າ ກົນໄກການເຮັດວຽກ ແລະການຄຸ້ມຄອງກິດຈະກຳ ຫຼືໂຄງການຊຸກຍູ້ສົ່ງເສີມຂອງຫ້ອງການ ກປ ເມືອງ ຄວນ



ຈະໄດ້ເນັ້ນໃສ່ເປັນເຂດການຜະລິດ ໂດຍຈັດຕັ້ງໃຫ້ມີຫ້ອງການເຮັດວຽກ / ທີ່ພັກ ພາກສະໜາມ (EZOŒ Extension Zone Office) ສຳລັບທີມນັກສົ່ງເສີມປະຈຳເຂດນັ້ນໆ. ທີມດັ່ງກ່າວຈະຕ້ອງເຮັດໜ້າທີ່ຝຶກອົບຮົມ_ຊຸກຍູ້ສົ່ງ ເສີມ ຢ່າງຮອບດ້ານຕະຫຼອດຊ່ວງລະດູການຜະລິດຕາມບົດບາດໜ້າທີ່ຂອງຫ້ອງການຕົນ, ໂດຍໃຫ້ມີລະບົບຕິດຕາມລາຍງານປະຈຳເດືອນ/ງວດ / ປີຕໍ່ຫ້ອງການ ກປ ເມືອງ ຢ່າງມີລະບົບ. ທັງໝົດສິ່ງເຫຼົ່ານັ້ນກໍ່ເພື່ອສ້າງໃຫ້ເກີດມີ **ລະບົບການສົ່ງເສີມຂັ້ນບ້ານ (Village Extension System “VES”)**